DVV International

Education for Everyone. Worldwide. Lifelong.

# ຈົດໝາຍຂ່າວ

## ການຮຽນຮູ້ຕະຫຼອດຊີວິດ ແລະ ການສຶກສານອກໂຮງຮຽນ ໃນສປປ ລາວ ແລະ ອາຊີຕາເວັນອອກສ່ຽງໃຕ້



No. 2-2017

ສະບັບພິເສດ:

## ການຝຶກອົບຮົມຄູຝຶກ ສຳລັບການສຶກສາ ນອກໂຮງຮຽນ ໃນ ສ ປປ ລາວ

ສະໜັບສະໜູນ ໂດຍ

vhs
DVV International

Education for Everyone. Worldwide.
Lifelong.



# ເປັນຫຍັງ ປະເທດລາວຈຶ່ງຕ້ອງການຄູຝຶກເຂົ້າໃນວຽກງານການສຶກສານອກໂຮງຮຽນ?

## ຖ້າທ່ານເຄີຍສອນນັກຮຽນທີ່ເປັນຊາວໜຸ່ມ ແລະ ຜູ້ໃຫຍ່ ໃນການສຶກສານອກໂຮງຮຽນ, ທ່ານຈະເຫັນໄດ້ວ່າ: ມັນມີຈຸດແຕກຕ່າງ! ແລະ ມັນບໍ່ແມ່ນວຽກງ່າຍ.

ທ່ານຕ້ອງເຮັດວຽກກັບບັນດາຜູ້ຄົນທີ່ມີແນວຄວາມຄິດເປັນຂອງຕົນເອງ, ຜູ້ທີ່ຍຶດຖືຄວາມສົນໃຈຂອງຕົນ, ຜູ້ທີ່ມີຫຼາຍຢ່າງຕ້ອງເຮັດໃນຄອບຄົວ, ໃນສະຖານທີ່ເຮັດວຽກ ຫຼື ໃນທົ່ງໄຮ່ທົ່ງນາ ແລະ ມັນຍັງເປັນການຍາກທີ່ຈະບັງຄັບໃຫ້ເຂົາເຈົ້າ ຮຽນໜັງສື.

ເວົ້າອີກຢ່າງໜຶ່ງກໍຄື: ຄູຝຶກ ແລະ ຜູ້ອໍານວຍຄວາມສະດວກ ໃນການສຶກສານອກໂຮງຮຽນຍັງຕ້ອງການທັກສະ ແລະ ຄວາມຊໍານານເພີ່ມອີກຈໍານວນໜຶ່ງ ເພື່ອເພີ່ມເຕີມໃສ່ໜ້າທີ່ຄວາມຮັບຜິດຊອບຂອງພວກເຂົາເຈົ້າຢ່າງມີປະສິດທິພາບ. ຄູທີ່ສອນເກັ່ງໃນໂຮງຮຽນບໍ່ແມ່ນຈະເປັນຄູຝຶກທີ່ດີໄດ້ໂດຍອັດຕະໂນມັດ ໃນການຮຽນຮູ້ຕະຫຼອດຊີວິດ! ການສຶກສານອກໂຮງຮຽນ ທີ່ບໍ່ມີຄຸນນະພາບແມ່ນເຮັດໃຫ້ເກີດມີອັດຕາການອອກໂຮງຮຽນສູງ ແລະ ຂາດການຍອມຮັບ ແລະການຊ່ວຍເຫຼືອດ້ານທຶນຮອນ.



ສິ່ງເຫຼົ່ານີ້ແມ່ນພື້ນຖານແນວຄວາມຄິດ ທີ່ເປັນແຮງຈູງໃຈໃຫ້ຫ້ອງການດີວີວີ ອິນເຕີເນເຊັນແນວ ແລະກົມການສຶກສານອກໂຮງຮຽນໄດ້ເລີ່ມຕົ້ນລົງມືໃນຫຼັກສູດ ຝຶກອົບຮົມຄົບວົງຈອນສໍາລັບຜູ້ມີຄວາມຊໍານານງານຈໍານວນ 35 ທ່ານເພື່ອໃຫ້ກາຍເປັນຄູຝຶກໃນການສຶກສານອກໂຮງຮຽນ. ບັນດາຄູຝຶກແມ່ນມາຈາກແຕ່ລະພາກ ຂອງ ສປປ ລາວ ເພື່ອມາຮຽນ ຄວາມຮູ້ພື້ນຖານ, ແນວທາງ ແລະ ວິທີການໃນການສຶກສາຂອງຊາວໜຸ່ມ ແລະ ຜູ້ໃຫຍ່ ເພື່ອໃຫ້ພວກເຂົາເຈົ້າເຫຼົ່ານັ້ນກາຍເປັນ ຄູຝຶກມືອາຊີບ, ຜູ້ອໍານວຍຄວາມສະດວກທີ່ມີປະສິດທິພາບ ແລະ ໃຫ້ສາມາດໄປຈັດການຝຶກອົບຮົມໃຫ້ແກ່ເພື່ອນຮ່ວມງານອື່ນທີ່ຢູ່ພາຍໃນແຂວງຂອງເຂົາເຈົ້າ.

ພວກເຮົາເຊື່ອວ່າ ການເປັນຊ່ຽວຊານໃນຫົວຂໍ້ໃດໜຶ່ງແມ່ນຍັງບໍ່ພຽງພໍ, ມີຄວາມສາມາດໃນການອ່ານ ແລະ ການຂຽນ, ມືອາຊີບໝັ້ນຄົງ ຫຼື ໄດ້ພາສາໃດໜຶ່ງ .ແຕ່ວ່າທ່ານຕ້ອງເຂົ້າໃຈວ່າທ່ານຈະຖ່າຍທອດຄວາມຮູ້ຂອງທ່ານໃຫ້ມີປະສິດທິພາບໄດ້ຢ່າງໃດ. ດັ່ງນັກປາດທ່ານໜຶ່ງໄດ້ເວົ້າວ່າ:

> “ບອກຂ້ອຍກ່ຽວກັບສິ່ງໃດສິ່ງໜຶ່ງ ແລະ ຂ້ອຍຈະລືມມັນ,
> ສະແດງໃຫ້ຂ້ອຍໄດ້ເຫັນ ແລະ ຂ້ອຍອາດຈະຈື່ຈໍາມັນໄດ້,
> ໃຫ້ຂ້ອຍມີສ່ວນຮ່ວມເຮັດນໍາ ແລະ ຂ້ອຍຈະເຂົ້າໃຈມັນໄດ້.

ສຸພາສິດດັ້ງເດີມໄດ້ບອກໃຫ້ພວກເຮົາເຫັນເຖິງຄວາມຈໍາເປັນທີ່ສະທ້ອນເຖິງວິທີການສິດສອນ, ຊຶ່ງລວມເອົາທັງໝົດຂອງຈິດວິນຍານ ແລະ ການມີສ່ວນຮ່ວມຂອງຜູ້ຮຽນຮູ້ຈົນກ້າວໄປເຖິງການດໍາເນີນງານ. ພຽງແຕ່ການບັນລະຍາຍບົດຮຽນເທົ່ານັ້ນຍັງບໍ່ພຽງພໍ! ແຕ່ວ່າມັນເປັນຫຼາຍກ່າວຄໍາຖາມໜຶ່ງຂອງການຮຽນຮູ້ກ່ຽວກັບດ້ານເຕັກນິກເທົ່ານັ້ນ: ດັ່ງທີ່ໄດ້ລະບຸໄວ້, ການສຶກສານອກໂຮງຮຽນ ແມ່ນວຽກງານທີ່ກ່ຽວຂ້ອງກັບຊາວໜຸ່ມ ແລະ ຜູ້ໃຫຍ່. ພວກເຮົາຕ້ອງໄດ້ເຂົ້າໃຈເຖິງຜູ້ຮຽນຮູ້ຂອງພວກເຮົາ, ຄວາມຕ້ອງການຂອງພວກເຂົາເຈົ້າ ແລະວິທີທາງການຮຽນຂອງເຂົາເຈົ້າ. ຍິ່ງໄປກວ່ານັ້ນ ພວກເຮົາຕ້ອງຍອມຮັບພວກເຂົາເຈົ້າໃນຖານະຄູ່ຮ່ວມງານໃນຂະບວນການຮຽນຮູ້. ດັ່ງທີ່ ທ່ານເປົາໂລ ແຟຣ (Paolo Freire) ຄູຜູ້ມີຊື່ສຽງໂດ່ງດັງຊາວບູາຊິວໄດ້ກ່າວໄວ້ວ່າ “ຖ້າວ່າການຈັດຕັ້ງໃດບໍ່ອະນຸຍາດໃຫ້ມີການສົນທະນາປຶກສາຫາລື ການຈັດຕັ້ງນັ້ນຕ້ອງມີການປ່ຽນແປງ” ມັນໄດ້ກ້າວໄປໄກກ່ວາພາບພົດເກົ່າໆ ຂອງນາຍຄູທີ່ມີຄວາມຮູ້ ແລະ ຜູ້ເຂົ້າຮ່ວມຜູ້ໜຶ່ງທີ່ຄວນຈະຮຽນ.

ຫຼັກການອີກອັນໜຶ່ງທີ່ສໍາຄັນຂອງ ການສຶກສານອກໂຮງຮຽນແມ່ນໄດ້ຖືກພົບໃນຄໍາເວົ້າຂອງ ທ່ານ ມານຄອມ ເອສ ໂນລ (Malcolm S Knowles), ໜຶ່ງໃນບັນດານັກວິຊາການສອນຜູ້ໃຫຍ່: “ຜູ້ໃຫຍ່ໄດ້ຖືກຊັກຈູງໃຫ້ມາຮຽນດ້ວຍຄວາມຕ້ອງການໃນປະສົບປະການ ແລະ ດ້ວຍຄວາມສົນໃຈ ການຮຽນຈະເຮັດໃຫ້ເຂົາເຈົ້າພໍໃຈ”. ການສິດສອນໃນການສຶກສານອກໂຮງຮຽນຄວນຈະເຄົາລົບໃນສິ່ງເຫຼົ່ານີ້ສະເໝີ: ຜູ້ເຂົ້າຮຽນເປັນຜູ້ຕັດສິນໃຈ ວ່າເຂົາຕ້ອງການຢາກຮຽນ ຫຼື ບໍ່, ບໍ່ແມ່ນຄູເປັນຜູ້ຕັດສິນ. ຖ້າຫາກວ່າພວກເຮົາຫາກບໍ່ເຄົາລົບກົດເກນນີ້ ໝາຍຄວາມວ່າຈະບໍ່ປະສົບຜົນສໍາເລັດ - ບັນດາຜູ້ຄົນເຫຼົ່ານັ້ນອາດຈະຍຸຕິການເຂົ້າຮ່ວມການຮຽນໃນຫ້ອງຮຽນຢ່າງງ່າຍດາຍ.

ໂດຍການແນະນໍາວິທີນີ້ ແລະອີກແນວຄວາມຄິດອື່ນຈໍານວນໜຶ່ງ, ໂຄງການພະຍາຍາມປະກອບສ່ວນໃນການຈັດກຸ່ມຜູ້ທີ່ມີຄວາມສາມາດໃນການຈັດຕັ້ງປະຕິບັດວຽກຂະບວນການຮຽນຮູ້ຢ່າງມີປະສິດທິພາບ ໃນການສຶກສານອກໂຮງຮຽນທີ່ຊ່ວຍໃຫ້ຊາວໜຸ່ມ ແລະ ຜູ້ໃຫຍ່ໄດ້ຮັບຄວາມຮູ້, ທັກສະ ແລະ ຄວາມສາມາດທີ່ພວກເຂົາຕ້ອງການ ເພື່ອປັບປຸງຊີວິດການເປັນຢູ່ຂອງເຂົາເຈົ້າ, ເຮັດໃຫ້ມີເຂົາເຈົ້າລາຍຮັບເພີ່ມຂຶ້ນ ຫຼື ໄດ້ຮັບການສຶກສາ ຂັ້ນພື້ນຖານຈໍານວນໜຶ່ງ ແລະ ໂຄງການທຽບເທົ່າ.

ຂ້າພະເຈົ້າຂໍສະຫຼຸບໂດຍຍົກເອົາຄໍາເວົ້າ ຂອງທ່ານ ອານເບີດ ເອັນສະຕົນ( Albert Einstein) ນັກຟີຊິກສາດຜູ້ມີຊື່ສຽງໂດ່ງດັງໄດ້ເວົ້າວ່າ: ການສຶກສາ ບໍ່ແມ່ນການຮຽນຕາມຕົວຈິງ ມັນຫາກແມ່ນການຝຶກຫັດຂອງການໃຊ້ສະໝອງໃນການຄົ້ນຄິດ.

**Uwe Gartenschlaeger**
ຜູ້ອໍານວຍການປະຈໍາພາກພື້ນ
ດີວີວີ ອິນເຕີເນເຊີນແນວ ອາຊີຕາເວັນອອກສ່ຽງໃຕ້





# ຫຼັກສູດໂກຼບາລີ - ຫຼັກສູດສາກົນກ່ຽວກັບການຝຶກອົບຮົມຄູສໍາລັບການສຶກສາ ແລະ ການຮຽນຮູ້ຂອງຜູ້ໃຫຍ່

ອີງຕາມ ບົດຄວາມຂອງ Maja Avramovska ແລະ Tania Czerwinski ຜູ້ຊ່ຽວຊານການສຶກສາຜູ້ໃຫຍ່: ຫຼັກສູດໂກຼບາລີ - ຫຼັກສູດສາກົນສໍາລັບການຝຶກອົບຮົມຄູສໍາລັບການສຶກສາ ແລະ ການຮຽນຮູ້ຜູ້ໃຫຍ່ (2016)

## ການພັດທະນາ ຫຼັກສູດໂກຼບາລີ

ການສອນເດັກນ້ອຍ ແລະ ການສະໜັບສະໜູນຜູ້ໃຫຍ່ໃນການຮຽນແມ່ນສອງສິ່ງທີ່ແຕກຕ່າງກັນ. ພວກເຂົາຕ້ອງການການຝຶກອົບຮົມວິຊາສະເພາະໃດໜຶ່ງ, ການກະກຽມ ແລະ ຄວາມຮູ້. ຄູຝຶກສອນຜູ້ໃຫຍ່ບໍ່ພຽງແຕ່ຈະກະກຽມຫົວບົດທີ່ຈະສອນເທົ່ານັ້ນ: ຄູຝຶກສອນຜູ້ໃຫຍ່ຕ້ອງມີທັກສະ ແລະ ຄວາມຊໍານານດ້ານເຕັກນິກໃນການສິດສອນຜູ້ໃຫຍ່ທີ່ດີ. ສໍາລັບເຫດຜົນນີ້ ອົງການອຸຍແນດສະໂກ ໄດ້ກໍານົດການປັບປຸງ ແລະ ການຝຶກອົບຮົມແບບມືອາຊີບໃນການຝຶກອົບຮົມໃຫ້ແກ່ການສິດສອນຜູ້ໃຫຍ່ດັ່ງທີ່ໄດ້ລະບຸໄວ້ໃນໜ້າວຽກທີ່ສໍາຄັນໃນອະນາຄົດຂອງແຜນການ ປະຕິບັດງານ Belém (2009) ເຊິ່ງສະແດງເຖິງຄໍາໝັ້ນສັນຍາສາກົນ ເພື່ອສ້າງຄວາມເຂັ້ມແຂງໃນການຮຽນຮູ້ຕະຫຼອດຊີວິດ ແລະ ການສຶກສານອກໂຮງຮຽນໃນທົ່ວໂລກ. ສະນັ້ນ ການຝຶກອົບຮົມສໍາລັບຄູສອນ ຜູ້ໃຫຍ່ແມ່ນມີບົດບາດສໍາຄັນໃນ ເປົ້າໝາຍການພັດທະນາແບບຍືນຍົງ.

ຫຼັກສູດໂກຼບາລີ ໄດ້ຖືກພັດທະນາຂຶ້ນ ໃນປີ 2013ໂດຍອີງໃສ່ພື້ນຖານຂອງຄວາມຕ້ອງການ ແລະ ກວດແກ້ຄືນໃນປີ 2015. ສະຖາບັນການສຶກສາຜູ້ໃຫຍ່ຂອງເຢຍລະມັນ (DIE), ຄູ່ຮ່ວມພັດທະນາຂອງ ດີວີວີ ອິນເຕີເນເຊີນແນວ ໄດ້ພັດທະນາຫຼັກສູດນີ້ ໂດຍມີເປົ້າໝາຍເພື່ອສະໜັບສະໜູນ ການເປັນຊ່ຽວຊານຂອງນັກການສຶກສາຜູ້ໃຫຍ່, ມັນລະບຸເຖິງຂອບວຽກທີ່ຄືກັນທີ່ສາມາດຊ່ວຍໃນການອອກແບບ ແລະ ການຈັດຕັ້ງປະຕິບັດໃນການແຜນງານການຝຶກອົບຮົມຄູຝຶກ.

## ເນື້ອໃນ ແລະ ຂໍ້ກໍານົດເບື້ອງຕົ້ນ

ຫຼັກສູດໂກຼບາລີ ສ້າງຂຶ້ນບົນພື້ນຖານຂອງຕົວແບບມາດຕະຖານເຊິ່ງສາມາດດັດປັບໄດ້ຕາມຄວາມຕ້ອງການຂອງແຕ່ລະທ້ອງຖິ່ນ. ຕົວແບບນີ້ມີບາງຫົວຂໍ້ທີ່ກໍານົດຄວາມສາມາດ ແລະ ຜົນການຮຽນຮູ້ ທີ່ກ່ຽວຂ້ອງກັບນັກການສຶກສາຜູ້ໃຫຍ່ໂດຍບໍ່ຄໍານຶງເຖິງບໍລິບົດທ້ອງຖິ່ນ ຫຼື ຫຼັກສູດທີ່ມີມາກ່ອນ.



**ຫຼັກສູດໂກຼບາລີ ຈັດຕັ້ງປະຕິບັດໃນ 5 ໂມດູນຕົ້ນຕໍ ລວມທັງພາກສະເໜີ:**

- **ໂມດຸນ 0**: ພາກສະເໜີ,
- **ໂມດຸນ 2**: ການຮຽນຮູ້ ແລະ ການສອນຜູ້ໃຫຍ່,
- **ໂມດຸນ 3**: ການສື່ສານ ແລະ ການເຮັດວຽກເປັນກຸ່ມໃນການສຶກສາຜູ້ໃຫຍ່,
- **ໂມດຸນ 4**: ວິທີການສອນຂອງການສຶກສາຜູ້ໃຫຍ່,
- **ໂມດຸນ 5**: ການວາງແຜນ, ການຈັດຕັ້ງປະຕິບັດ ແລະ ການປະເມີນຜົນຂອງການສຶກສາຜູ້ໃຫຍ່.

ນອກນັ້ນ, ຍັງມີໂມດູນທາງເລືອກ: ຜູ້ເຂົ້າຮ່ວມສາມາດເພີ່ມຄວາມຮູ້ ແລະ ທັກສະທີ່ໄດ້ມາເຂົ້າໃນໂມດຸນຫຼັກ ຫຼື/ແລະ ເພີ່ມຄວາມຮູ້ ແລະທັກສະໃໝ່ທີ່ກ່ຽວຂ້ອງກັບເຂົາເຈົ້າ ເຊັ່ນ: ບົດບາດຍິງ-ຊາຍ, ສັນຕິສຶກສາ ຫຼື ການປ່ຽນແປງສະພາບ ດິນຟ້າອາກາດ.

## ອີງຕາມຄວາມຕ້ອງການຂອງທ້ອງຖິ່ນ

ຄວາມຍືນຍົງຕ້ອງການຮັບປະກັນວ່າ ແມ່ນສ່ວນໜຶ່ງຂອງ ແນວຄວາມຄິດໃນການຝຶກອົບຮົມຄູຝຶກ.ໃນການດໍາເນີນການຫຼັກສູດຄວນຈະແທດເໝາະ ແລະ ສອດຄ່ອງກັບຄວາມຕ້ອງການຂອງທ້ອງຖິ່ນ. ສິ່ງສໍາຄັນແມ່ນສະຖາບັນ ແລະ ຄະນະວິຊາການທີ່ນໍາເອົາຫຼັກສູດ ໂກຼບາລີ ໄປຈັດຕັ້ງປະຕິບັດນັ້ນ ສາມາດດັດປັບເນື້ອໃນໃຫ້ເໝາະສົມກັບທ້ອງຖິ່ນ. ມັນຍັງຕ້ອງໄດ້ມີການປະສົມປະສານກັບລະບົບການສຶກສາຜູ້ໃຫຍ່ທີ່ມີຢູ່, ໂດຍອີງຕາມແນວທາງ ນະໂຍບາຍຂອງລັດຖະບານ ແລະ ຄວາມຕ້ອງການຂອງທ້ອງຖິ່ນ ແລະ ເພື່ອການຮ່ວມມືໃນລະດັບດຽວກັນໃນຂົງເຂດ. ຄູ່ຮ່ວມພັດທະນາໃນທ້ອງຖິ່ນຕ້ອງມີຄວາມຮັບຜິດຊອບຕໍ່ການດັດປັບ ແລະ ການມີສ່ວນຮ່ວມຂອງລັດຖະບານ, ສະຖາບັນສາກົນ ແລະ ພາກສ່ວນສຶກສາ.

ໜຶ່ງໃນຂັ້ນຕອນທີ່ປະຕິບັດໃນຫຼັກສູດໂກຼບາລີ ເຊັ່ນ: ຫຼັກສູດໂກຼບາລີໃນພາສາທ້ອງຖິ່ນ. ຫຼັກສູດໂກຼບາລີ ຈະໄດ້ແປເປັນ 10 ພາສາຄື: Lao, Arabic, English, German, Albanian, Bosnian, Serbian, Macedonian, Russian ແລະ Spanish). ປະຈຸບັນນີ້ ຫຼັກສູດໂກຼບາລີໄດ້ນໍາໃຊ້ເປັນໂຄງການທົດລອງໃນບາງປະເທດເຊັ່ນ: Uzbekistan, Macedonia ແລະ Belarus ໃນປີ 2013- 15 ແລະ ປະຈຸບັນແມ່ນ ປະເທດລາວ, Palestine, Cuba, Ukraine, Kosovo. ຫວັງວ່າໃນອານາຄົດການປະຕິບັດວຽກນີ້ຈະໄດ້ຂະຫຍາຍການກະກຽມໃນການຝຶກຄູຝຶກມືອາຊີບ ໃນທົ່ວໂລກ.




**Download on dvv-international.de**

vhs

DVV International

Education for Everyone. Worldwide. Lifelong.

ຂຽນໂດຍ
ເບຄຳ ສະເຫຼີມສຸກ



GLOCALIZATION.
International experience.
Local solutions.



# ການຈັດຕັ້ງປະຕິບັດຫຼັກສູດ ໂກູບາລີ ໃນ ສປປ ລາວ: ໂຄງການ ການຝຶກອົບຮົມຄູຝຶກການສຶກສານອກໂຮງຮຽນ

ການນຳໃຊ້ຫຼັກສູດໂກູບາລີແມ່ນສາມາດເກີດຂຶ້ນໄດ້ພາຍໃຕ້ໂຄງການ ການຝຶກອົບຮົມຄູຝຶກ. ໂຄງການນີ້ແມ່ນມີຄວາມສຳຄັນຫຼາຍໃນການພັດທະນາຄວາມອາດສາມາດຂອງບຸກຄະລາກອນບໍ່ສະເພາະແຕ່ໃນຂະແໜງການສຶກສານອກໂຮງຮຽນເທົ່ານັ້ນແຕ່ຍັງມີພາກສ່ວນອື່ນໆ ໃນຂອບເຂດທົ່ວປະເທດທີ່ໄດ້ຮັບຜົນປະໂຫຍດຈາກໂຄງການນີ້ຕື່ມອີກ.

**The basis for success: A professional cooperation of the partners.**

Australian Volunteers FOR INTERNATIONAL DEVELOPMENT

RMIT UNIVERSITY

ພ້ອມກັນນັ້ນ ໂຄງການນີ້ຍັງຕອບສະໜອງບໍ່ພຽງແຕ່ທາງດ້ານທັກສະດ້ານວິຊາການເທົ່ານັ້ນ ແຕ່ຍັງໄດ້ເພີ່ມຄວາມຮູ້ ຄວາມເຂົ້າໃຈກ່ຽວກັບຄວາມໝາຍຂອງການຮຽນຮູ້ຕະຫຼອດຊີວິດ ແລະ ແນວຄວາມຄິດຂອງທິດສະດີການສອນຜູ້ໃຫຍ່. ໂຄງການຝຶກອົບຮົມຄູຝຶກແມ່ນມີໄລຍະຢູ່ສອງປີ ໂດຍການຮ່ວມມືລະຫວ່າງ ດີວີວີ ອິນເຕີເນເຊິນເນວ ແລະ ກົມການສຶກສານອກໂຮງຮຽນ ພ້ອມກັບການສະໜັບສະໜູນຈາກ ມະຫາວິທະຍາໄລ ອາເອັມໄອທີ ເມວເບີນ, ສະມາຄົມອາສເບ ແລະ ຢູເນັດສະໂກ ປະເທດໄທ. ໂຄງການນີ້ໄດ້ເລີ່ມປະຕິບັດໂຄງການໃນເດືອນທັນວາ 2015 ແລະ ຈະສິ້ນສຸດ ໃນເດືອນມິຖຸນາ 2017.

## ໂຄງການໄດ້ສ້າງຂຶ້ນບົນພື້ນຖານປະສົບການ ໃນປະເທດ ແລະ ສາກົນ

ການວາງແຜນການຝຶກອົບຮົມແມ່ນປະກອບມີຄູຝຶກທີ່ມີປະສົບ ການ 5 ທ່ານ, ໃນນັ້ນ 3 ທ່ານແມ່ນມາຈາກຕ່າງປະເທດ ແລະ ອີກ 2 ທ່ານແມ່ນຄົນລາວ ເຊິ່ງທັງ 5 ທ່ານແມ່ນມີປະສົບການຕົວຈິງໃນການສຶກສາຜູ້ໃຫຍ່. Dr. Jose Robert Guevara ຮອງສາດສະດາຈານດ້ານການພັດທະນາສາກົນ ໂຮງຮຽນຂອງສາກົນການຮຽນຮູ້ກ່ຽວກັບຕົວເມືອງ ແລະ ສັງຄົມ ຂອງມະຫາໄລ ອາເອັມໄອທີ. ທ່ານ ນາງ Anita Borkar ຜູ້ປະສານງານຂອງ ASPBAE, ທ່ານ ນາງ Ushio Miura ຊ່ຽວຊານໂຄງການ ອົງການຢູເນັດສະໂກບາງກອກ, ປະເທດໄທ, ທ່ານ ສຸພາບ ຄູນວິໄຊ ຫົວໜ້າໜ່ວຍງານພັດທະນາຫຼັກສູດ ແລະ ຜູ້ຊ່ຽວຊານດ້ານການຝຶກອົບຮົມຈາກສູນພັດທະນາການສຶກສານອກໂຮງຮຽນ, ແລະ ທ່ານ ນາງ ເບຄຳ ສະເຫຼີມສຸກ, ຜູ້ຈັດການໂຄງການ ການພັດທະນາຄວາມສາມາດ ແລະ ການຕິດຕາມປະເມີນຜົນ ດີວີວີ ອິນເຕີເນເຊິນແນວ. ການມີຄູຝຶກທີ່ຫຼາກຫຼາຍລະຫວ່າງຄູຝຶກສາກົນ ແລະ ທ້ອງຖິ່ນ ຊ່ວຍໃຫ້ທີມງານຄູຝຶກສາມາດອອກແບບ ແຜນຝຶກອົບຮົມທີ່ແທດເໝາະກັບຄວາມຕ້ອງການຂອງກຸ່ມເປົ້າໝາຍກໍຄືສະພາບຄວາມເປັນຈິງຂອງປະເທດລາວ. ພ້ອມກັນນັ້ນກໍ່ຍັງມີການສະໜັບສະໜູນ ຈາກອົງການອາສາສະໝັກຂອງອົດສະຕາລີ ເຊິ່ງແມ່ນ ທ່ານ ນາງ Joanne Binns ພະນັກງານສະໜັບສະໜູນໂຄງການ ການສຶກສາ, ທ່ານ Prof Bruce Wilson ຈາກອາເອມໄອທີ ທີ່ຮັບຜິດຊອບໃນການປະເມີນ ແລະ ເຮັດບົດວິໄຈ.

## ກຸ່ມນັກວິຊາການທີ່ຫຼາກຫຼາຍ 35 ທ່ານ

ນັກສຳມະນາກອນ ສ່ວນຫຼາຍແມ່ນມາຈາກພາກສ່ວນການສຶກສານອກໂຮງຮຽນ ພາຍໃຕ້ກົມການສຶກສານອກໂຮງຮຽນ. ນອກຈາກນີ້ ນັກສຳມະນາກອນບາງສ່ວນແມ່ນມາຈາກ ອົງການຈັດຕັ້ງມະຫາຊົນຕ່າງໆ ເຊັ່ນ: ສະຫະພັນແມ່ຍິງລາວ, ສູນກາງຊາວໜຸ່ມ, ສູນຝຶກອົບຮົມວິຊາຊີບ,ມະຫາວິທະຍາໄລແຫ່ງຊາດ. ພ້ອມນັ້ນໂຄງການນີ້ຍັງໄດ້ເຂົ້າເຖິງສະມາຄົມທ້ອງຖິ່ນ ເຊັ່ນ: ສູນຝຶກວິຊາຊີບແມ່ຍິງພິການ ແລະ ສະມາຄົມຮ່ວມໃຈອາສາສະໝັກ ທີ່ເຮັດວຽກສົ່ງເສີມວຽກງານອາສາສະໝັກ. ຜູ້ເຂົ້າຮ່ວມທັງໝົດແມ່ນມີຢູ່ 35 ທ່ານ. ໃນນັ້ນ18 ທ່ານແມ່ນແມ່ຍິງ ແລະ 60% ຂອງຜູ້ເຂົ້າຮ່ວມທັງໝົດແມ່ນຄູສອນຜູ້ໃຫຍ່. ຄວາມຫຼາກຫຼາຍຂອງນັກສຳມະນາກອນຖືວ່າເປັນຈຸດເດັ່ນຂອງໂຄງການນີ້ ເຊິ່ງນັກສຳມະນາກອນຈະສາມາດນຳເອົາຄວາມຮູ້ເຫຼົ່ານັ້ນໄປນຳໃຊ້ໃນວຽກງານຂອງຕົນ ກໍຄືຜູ້ທີ່ຢູ່ໃນຕຳແໜ່ງທີ່ສາມາດຕັດສິນໃຈໃນວຽກງານຕ່າງໆ ເຫັນໄດ້ເຖິງຄວາມສຳຄັນ ແລະ ສະໜັບສະໜູນວຽກງານການສຶກສານອກໂຮງຮຽນ.

## ປັບປຸ່ງນຈາກທິດສະດີ ສູ່ການປະຕິບັດ

ຫຼັກສູດໂກູບາລີ ເປັນແນວທາງໃນການຝຶກອົບຮົມ ເຊິ່ງຖືວ່າເປັນແນວທາງທີ່ຈະແຈ້ງ ແລະ ຊັດເຈນໃຫ້ແກ່ການວາງແຜນການຝຶກອົບຮົມ ແລະ ຊ່ວຍໃຫ້ທີມງານຄູຝຶກສາມາດລິເລີ່ມການວາງແຜນໄດ້ດີ. ຫຼັກສູດໂກູບາລີຖືວ່າເໝາະສົມຫຼາຍໃນການທີ່ໃຫ້ຄູຝຶກຄຳນຶງເຖິງຄວາມເປັນຈິງຂອງກຸ່ມເປົ້າໝາຍກໍຄືສະພາບແວດລ້ອມຂອງທ້ອງຖິ່ນ. ອີງຕາມວັດທະນາທຳ ແລະ ນິໄສການອ່ານຂອງຄົນລາວ. ດັ່ງນັ້ນການວາງແຜນການຝຶກອົບຮົມຈຶ່ງເນັ້ນໃສ່ພາກປະຕິບັດຕົວຈິງຫຼາຍກວ່າທິດສະດີ. ດ້ວຍເຫດນີ້, ຫົວຂໍ້ການຝຶກອົບຮົມຈຶ່ງບໍ່ໄດ້ເຮັດຕາມລຳດັບຂອງຫຼັກສູດ





ໂຢູບາລີ ແລະ ຍັງໄດ້ປະກອບພາກປະຕິບັດອື່ນໆ ເຂົ້າຕື່ມອີກ.

## 5 ໂມດູນ ພາຍໃນ 2 ປີ

ຫຼັງຈາກເປີດໂຄງການໃນເດືອນທັນວາ 2015 ເພື່ອນຳສະເໜີແຜນການຝຶກອົບຮົມໃຫ້ນັກສຳມະນາກອນ ພ້ອມກັບຕົກລົງຮ່ວມກັນສຳລັບແຜນການຝຶກອົບຮົມໃນໄລຍະສອງປີພ້ອມກັນນັ້ນກໍເປັນໂອກາດໃຫ້ແກ່ທີມງານຄູຝຶກໄດ້ທຳຄວາມຮູ້ຈັກນັກສຳມະນາກອນ. ການຝຶກອົບຮົມແມ່ນໄດ້ເລີ່ມຕົ້ນດ້ວຍການປະເມີນຄວາມຕ້ອງການຂອງຊຸມຊົນ. ກິດຈະກຳນີ້ໄດ້ປະກອບເຂົ້າໃນການຝຶກອົບຮົມເພື່ອໃຫ້ຜູ້ເຂົ້າຮ່ວມໄດ້ປະຕິບັດການຝຶກອົບຮົມຕົວຈິງ. ໃນການຝຶກອົບຮົມຊຸດທີ 1 ນັ້ນແມ່ນໄດ້ເອົາພາກທີສອງຂອງຫຼັກສູດໂຢູບາລີຂຶ້ນກ່ອນ ໃນຫົວຂໍ້: ການຮຽນຮູ້ຂອງຜູ້ໃຫຍ່ - ຜູ້ໃຫຍ່ມີວິທີການຮຽນຄືແນວໃດ? ໂດຍການຮວບຮວມເອົາປະສົບການໃນການຮຽນຂອງຜູ້ໃຫຍ່ມາແລກປ່ຽນກັນ. ການຝຶກອົບຮົມຊຸດທີ 2 ໄດ້ຈັດຂຶ້ນໃນຊ່ວງເດືອນພຶດສະພາ 2016 ໃນຫົວຂໍ້: ເຕັກນິກການສອນຜູ້ໃຫຍ່ ເຊິ່ງເປັນພາກທີ 4 ຂອງຫຼັກສູດໂຢູບາລີ. ການຝຶກອົບຮົມຊຸດຕໍ່ມາແມ່ນໄດ້ຈັດຂຶ້ນໃນຊ່ວງເດືອນກຸມພາ 2017 ໃນຫົວຂໍ້: ການເຮັດວຽກເປັນກຸ່ມ ແລະ ການສື່ສານ. ຖືໄດ້ວ່າການປະຕິບັດໂຄງນີ້ແມ່ນໄດ້ມາຮອດເຄິ່ງທາງແລ້ວ ແລະ ເພື່ອເຮັດໃຫ້ໂຄງການປະສົບຜົນສຳເລັດ ແລະ ມີຄວາມຍືນຍົງ, ທາງຫ້ອງການ ດີວີວີ ອິນເຕີເນເຊິນແນວ ໄດ້ສະໜອງທຶນຈຳນວນໜຶ່ງໃຫ້ແກ່ນັກສຳມະນາກອນໄດ້ຈັດການຝຶກອົບຮົມໃນກົມກອງຂອງຕົນ ເພື່ອໃຫ້ໂອກາດແກ່ເຂົາເຈົ້າໄດ້ປະຕິບັດການຝຶກອົບຮົມດ້ວຍຕົນເອງ ໂດຍນຳໃຊ້ບົດຮຽນທີ່ໄດ້ຈາກການຝຶກອົບຮົມ ແລະ ເພື່ອເປັນການຮຽນຮູ້ເອົາບົດຮຽນກໍຄືເປັນການຕິດຕາມຂອງທີມງານຄູຝຶກໄປພ້ອມໆກັນ. ສິ່ງສຳຄັນທີ່ສຸດຂອງການຕິດຕາມການຝຶກອົບຮົມນີ້ແມ່ນເພື່ອໃຫ້ມັນມີຄວາມດຸ່ນດ່ຽງກັນລະຫວ່າງພາກທິດສະດີ ແລະ ພາກປະຕິບັດຕົວຈິງ.



ນອກຈາກນັ້ນ ການຕິດຕາມການຝຶກອົບຮົມບໍ່ພຽງແຕ່ເປັນປະໂຫຍດໃຫ້ແກ່ນັກສຳມະນາກອນເທົ່ານັ້ນ, ແຕ່ຍັງເປັນຜົນປະໂຫຍດໃຫ້ແກ່ທີມງານຄູຝຶກທີ່ໄດ້ມີໂອກາດຮຽນຮູ້ກ່ຽວກັບນັກສຳມະນາກອນເພື່ອຊ່ວຍໃຫ້ທີມງານ ສາມາດອອກແບບການຝຶກອົບຮົມໄດ້ແທດເໝາະກັບກຸ່ມເປົ້າໝາຍຕື່ມອີກ.

## ບົດບາດບົດ-ຊາຍ: ຫຼາຍກວ່າຊີວະວິທະຍາ

ນອກຈາກການຝຶກອົບຮົມຕາມຫົວຂໍ້ໃນຫຼັກສູດໂຢູບາລີແລ້ວ, ຍັງໄດ້ມີການຈັດຝຶກອົບຮົມຫົວຂໍ້ທາງເລືອກຕື່ມອີກ ເຊິ່ງຫົວຂໍ້ທີ່ເລືອກແມ່ນ: ຄວາມເຂົ້າໃຈພື້ນຖານ ແລະ ການເຊື່ອມສານບົດບາດຍິງ-ຊາຍໃນການສຶກສານອກໂຮງຮຽນ ເຊິ່ງໄດ້ຈັດໃນຊ່ວງເດືອນກັນຍາ 2016. ການຝຶກອົບຮົມຊຸດນີ້ ແມ່ນເພື່ອເພີ່ມຄວາມເຂົ້າໃຈຂອງນັກສຳມະນາກອນກ່ຽວກັບບົດບາດຍິງ-ຊາຍ ໃນພາບລວມກໍຄືໃນສະພາບບ່ອນທີ່ຕົນສັງກັດຢູ່. ຈຸດປະສົງຫຼັກຂອງການຝຶກອົບຮົມຊຸດນີ້ແມ່ນເພື່ອໃຫ້ນັກສຳມະນາກອນມີຄວາມເຂົ້າໃຈກ່ຽວກັບຄວາມໝາຍຂອງຄຳວ່າ “ບົດບາດຍິງ-ຊາຍ” ແລະ ເຫັນໄດ້ເຖິງຄວາມແຕກຕ່າງລະຫວ່າງຄວາມໝາຍຂອງຄຳວ່າ ເພດ ແລະ ບົດບາດຍິງ-ຊາຍ. ເປົ້າໝາຍອັນທີ່ສອງແມ່ນເພື່ອເຂົ້າໃຈຄຳວ່າຄວາມບໍ່ເທົ່າທຽມກັນທາງດ້ານບົດບາດຍິງ-ຊາຍ. ພື້ນຖານແລ້ວແມ່ນເພື່ອສ້າງຄວາມເຂົ້າໃຈໃຫ້ແກ່ນັກສຳມະນາກອນ ເຂົ້າໃຈຄວາມບໍ່ເທົ່າທຽມກັນທາງດ້ານບົດບາດຍິງຊາຍໃນຊີວິດປະຈຳວັນກໍຄືໃນອົງກອນບ່ອນເຮັດວຽກຂອງຕົນ. ເປົ້າໝາຍທີ່ສາມແມ່ນເພື່ອອະທິບາຍແນວຄວາມຄິດຂອງການເຊື່ອມສານບົດບາດຍິງ-ຊາຍ ແລະ ວິທີການທີ່ນັກສຳມະນາກອນສາມາດນຳໃຊ້ໃນວຽກງານຂອງຕົນ ເພື່ອປັບປຸງຄຸນນະພາບຊີວິດຂອງແມ່ຍິງ ແລະ ເດັກນ້ອຍທີ່ດ້ອຍໂອກາດ. ການຝຶກອົບຮົມໃນພາກສຸດທ້າຍຂອງໂຄງການນີ້ແມ່ນຫົວຂໍ້: ການວາງແຜນ ແລະ ການປະເມີນ ເຊິ່ງຈະໄດ້ຈັດຂຶ້ນໃນເດືອນມິຖຸນາ 2017 ແລະ ເປັນການປິດໂຄງການການຝຶກອົບຮົມຄູຝຶກ ສຳລັບການສຶກສານອກໂຮງຮຽນພ້ອມ.

**ໂຄງການຝຶກອົບຮົມຄູຝຶກນີ້ ຈະສິ້ນສຸດລົງຫຼັງຈາກຮຽນຈົບ 5 ໂມດູນ ພ້ອມດ້ວຍໃບຢັ້ງຢືນ**



## ໂຄງການຝຶກອົບຮົມຄູຝຶກ

ໂຄງການການຝຶກອົບຮົມຄູຝຶກແມ່ນມີໄລຍະຢູ່ສອງປີ ໂດຍການຮ່ວມມືລະຫວ່າງ ດີວີວີ ອິນເຕີແນເຊິນເນວ ແລະ ກົມການສຶກສານອກໂຮງຮຽນ ພ້ອມກັບການສະໜັບສະໜູນຈາກມະຫາວິທະຍາໄລ ອາເອັມໄອທີ ເມວເບີນ, ສະມາຄົມອາຊີປາຊີຟິກສຳລັບການສຶກສາຂັ້ນພື້ນຖານ & ການສຶກສາຜູ້ໃຫຍ່ ແລະ ຢູເນັດສະໂກ ປະເທດໄທ. ໂຄງການນີ້ໄດ້ເລີ່ມປະຕິບັດໂຄງການໃນເດືອນທັນວາ 2015 ແລະ ຈະສິ້ນສຸດ ໃນເດືອນມິຖຸນາ 2017.





# ວິໄສທັດຂອງຄູຝຶກ – ຈາກຫຼັກສູດໂກ້ບາລີ ສູ່ການຝຶກອົບຮົມຄູຝຶກ

J. Robbie Guevara, ມະຫາວິທະຍາໄລ RMIT

ຄວາມເຂົ້າໃຈເບື້ອງຕົ້ນຂອງຂ້າພະເຈົ້າກ່ຽວກັບການຝຶກອົບຮົມຄູຝຶກໃນປະເທດລາວແມ່ນການໄດ້ສ້າງຂີດຄວາມສາມາດຂອງບຸກຄະລາກອນທີ່ເຂົ້າຮ່ວມຝຶກອົບຮົມ ເພື່ອສາມາດໄປຈັດຕັ້ງການຝຶກອົບຮົມທີ່ມີຄຸນນະພາບ ໃນຂະແໜງການສຶກສານອກໂຮງຮຽນພາຍໃນຊຸມຊົນທ້ອງຖິ່ນຂອງເຂົາເຈົ້າ. ດັ່ງທີ່ພວກເຮົາໄດ້ຈັດການຝຶກອົບຮົມ 6 ຄັ້ງພາຍໃນໄລຍະເວລາຫຼາຍກວ່າ 18 ເດືອນ, ທີມງານການຝຶກອົບຮົມຂອງພວກເຮົາເຫັນໄດ້ວ່າພວກເຮົາມີຄວາມຕ້ອງການທີ່ຈະສ້າງຊຸມຊົນແຫ່ງການປະຕິບັດ (CoP) ທີ່ຈະໃຫ້ການສະໜັບສະໜູນຄູຝຶກໃຫ້ເຂົາເຈົ້າສາມາດໄປຈັດຕັ້ງປະຕິບັດການຝຶກອົບຮົມການສຶກສານອກໂຮງຮຽນທີ່ມີຄຸນນະພາບ. ການໃຫ້ສະໜັບສະໜູນຕໍ່ເນື່ອງນີ້ ມີຄວາມຈຳເປັນຍ້ອນພວກເຂົາເຈົ້າຈະເຮັດວຽກໃນລະບົບການສຶກສາ ເຊິ່ງການສຶກສານອກໂຮງຮຽນຍັງເປັນສ່ວນໜ້ອຍຂອງການສຶກສາທົ່ວໄປ.

ນີ້ແມ່ນຄວາມຫວັງຂອງຂ້າພະເຈົ້າທີ່ຈະໃຫ້ ເປົ້າໝາຍ 4 ຂອງການພັດທະນາທີ່ຍືນຍົງ, ການສຶກສາ ແລະ ການຮຽນຮູ້ຕະຫຼອດຊີວິດ ຈະຊ່ວຍປັບປຸງທຸກຮູບແບບຄວາມຮັບຮູ້ຂອງການສຶກສາ ແລະ ການຮຽນ: ການສຶກສາໃນໂຮງຮຽນ, ນອກໂຮງຮຽນ ແລະ ຕາມອັດທະຍາໄສ  ແຕ່ລະຂະແໜງມີບົດບາດ ເພື່ອບັນລຸເປົ້າໝາຍການພັດທະນາແບບຍືນຍົງ ແລະ ດັ່ງນັ້ນ ການຝຶກອົບຮົມຄູຝຶກຂອງພວກເຮົາແມ່ນມີບົດບາດທີ່ຍິ່ງໃຫຍ່ໃນອະນາຄົດອັນໃກ້ນີ້ ທີ່ຈະບັນລຸຜົນສຳເລັດ ຂອງ ຄຸນນະພາບການສຶກສາ ແລະ ການຮຽນຮູ້ຕະຫອດຊີວິດ.

ໜຶ່ງໃນປະສົບການທີ່ສຳຄັນໃນການຝຶກອົບຮົມຄູຝຶກສຳລັບຂ້າພະເຈົ້າແມ່ນວິທີການ, ຮ່ວມກັນກັບຜູ້ເຂົ້າຮ່ວມ, ພວກເຮົາພັດທະນາຂອບວຽກຂອງການຝຶກອົບຮົມໂດຍອີງໃສ່ຄວາມຄາດຫວັງຂອງເຂົາເຈົ້າ ທີ່ເກັບຮົບໂຮມມາໃນໄລຍະການຈັດຝຶກອົບຮົມຄັ້ງທຳອິດຄັ້ງທີ່ໜຶ່ງໃນເດືອນ ທັນວາ 2015. ໃຈກາງຂອງຂອບວຽກແມ່ນຜູ້ເຂົ້າຮ່ວມຝຶກອົບຮົມຄູຝຶກ ແລະ ທັງເປັນເພື່ອນຜູ້ຮ່ວມຮຽນ ທີ່ມີຄວາມແຕກຕ່າງກັນ ໂດຍມີເປົ້າໝາຍສ້າງຄວາມສາມາດໃນການດຳເນີນການຝຶກອົບຮົມກ່ຽວກັບວຽກງານການສຶກສານອກໂຮງຮຽນທີ່ມີຄຸນນະພາບ. 4 ອົງປະກອບໄດ້ຖືກສ້າງເປັນ 4 ແຈ ດັ່ງນີ້: ແມ່ນຫຍັງ ຫຼື ວິໄສທັດຂອງການສຶກສານອກໂຮງຮຽນ, ວິທີການ ຫຼື ການຝຶກປະຕິບັດ ຂອງການສຶກສາຜູ້ໃຫຍ່, ແມ່ນຫຍັງ ຫຼື ຂອບທິດສະດີທີ່ເໝາະສົມ ແລະ ຂອບນະໂຍບາຍທີ່ຕອບສະໜອງວຽກງານການສຶກສານອອກໂຮງຮຽນ.

ຄວາມຄາດຫວັງໃນຂອບວຽກນີ້ແມ່ນໄດ້ກາຍມາເປັນຂອບໃນການດຳລົງຊີວິດ. ມັນໄດ້ສືບຕໍ່ໃຫ້ມີຈຸດຢືນ ບໍ່ພຽງແຕ່ການປະຕິບັດທົບທວນຄືນຄວາມຄາດຫວັງຂອງຜູ້ເຂົ້າຮ່ວມຝຶກອົບຮົມເທົ່ານັ້ນ ແຕ່ທີ່ສຳຄັນກວ່ານັ້ນແມ່ນການສ້າງແຜນການການຮຽນຮູ້ຢ່າງຕໍ່ເນື່ອງຂອງພວກເຂົາ. ໃນໄລຍະຂອງການຝຶກອົບຮົມ ຄັ້ງທີ 2, ຂ້າພະເຈົ້າໄດ້ຮັບຟັງຄວາມຄິດຂອງຜູ້ເຂົ້າຮ່ວມວ່າໄດ້ພະຍາຍາມວາງແຜນບົດຮຽນທີ່ພວກເຂົາເຈົ້າຫາກໍໄດ້ຮຽນມາເຂົ້າໃສ່ໃນຂອບວຽກຂອງການຝຶກອົບຮົມ. ພວກເຂົາຍັງໄດ້ອະທິບາຍຕື່ມວ່າພວກເຂົາພະຍາຍາມຍົກເອົາເນື້ອໃນທີ່ສຳຄັນຂອງບົດຮຽນເຂົ້າໃສ່ຂອບວຽກເພາະວ່າພວກເຂົາເຈົ້າຮູ້ສຶກວ່າມັນແມ່ນກຸນແຈທີ່ສຳຄັນຂອງບົດຮຽນ(ເຊັ່ນດຽວກັບແຮງຈູງໃຈໃຫ້ຜູ້ໃຫຍ່ໃຫ້ມາຮຽນ) ໂດຍທົ່ວໄປແລ້ວມັນພົວພັນເຖິງ 4 ອົງປະກອບໃນຂອບວຽກ.  ຂ້າພະເຈົ້າຂໍສະແດງຄວາມຊົມເຊີຍມາຍັງບັນດາຜູ້ເຂົ້າຮ່ວມ ມັນສະແດງໃຫ້ເຫັນຢ່າງຊັດເຈນເຖິງຄວາມເຂົ້າໃຈຢ່າງເລິກເຊິ່ງຕໍ່ກັບວຽກງານການສຶກສານອກໂຮງຮຽນ, ເຫັນໄດ້ວ່າມີການເຊື່ອມຕໍ່ລະຫວ່າງ ທິດສະດີ ແລະ ພາກປະຕິບັດຕົວຈິງ ທີ່ໄດ້ລະບຸໄວ້ໃນວິໄສທັດ ແລະ ການຊີ້ນຳຈາກນະໂຍບາຍ.

ແລະ ຂ້າພະເຈົ້າຈະສືບຕໍ່ຮຽນຮູ້ ຄຽງຄູ່ກັບນັກຝຶກອົບຮົມຂອງເຮົາ ແລະ ຫວັງວ່າພວກເຮົາບໍ່ພຽງແຕ່ປະສົບຜົນສຳເລັດໃນການສ້າງຂີດສາມາດໃຫ້ບຸກຄົນເທົ່ານັ້ນ ແຕ່ຍັງເປັນການສ້າງຊຸມຊົນການເຮັດວຽກຕົວຈິງອີກດ້ວຍ ເພື່ອຊ່ວຍໃຫ້ມີຄວາມກ້າວໜ້າໃນການພັດທະນາຄວາມຮູ້, ການປະຕິບັດຕົວຈິງ ແລະ ນະໂຍບາຍຂອງການສຶກສານອກໂຮງຮຽນ ທັງນີ້ແມ່ນເພື່ອບັນລຸວິໄສທັດ ຄຸນນະພາບຂອງການສຶກສາ ແລະ ການຮຽນຮູ້ຕະຫຼອດຊີວິດ ສຳລັບການພັດທະນາທີ່ຍືນຍົງໃນ ສປປ ລາວ.

vhs
DVV International

Education for Everyone. Worldwide.
Lifelong.

ຈົດໝາຍຂ່າວ № 3/2017



# ກ່ອງຄວາມຮູ້
# ຂໍ້ມູນທີ່ໜ້າສົນໃຈກ່ຽວກັບການສຶກສາຜູ້ໃຫຍ່

## ຂໍ້ມູນທີ່ໜ້າສົນໃຈກ່ຽວກັບເຄື່ອງມື, ກອບແນວຄວາມຄິດ ແລະ ວິທີການ

### ການຮຽນຮູ້ຕະຫຼອດຊີວິດແມ່ນຫຍັງ?
ມີຫຼາຍຄຳນິຍາມກ່ຽວກັບການຮຽນຮູ້ຕະຫຼອດຊີວິດ. ມີສອງຄຳນິຍາມທີ່ດີຫຼາຍຄື: “ການຮຽນຮູ້ທີ່ດຳເນີນໄປຕະຫຼອດຊີວິດ, ສາມາດປ່ຽນແປງໄດ້ ໃນຊ່ວງເວລາ ແລະ ສະຖານທີ່ ແຕກຕ່າງກັນ”.
“ການຮຽນຮູ້ຕະຫຼອດຊີວິດ ເປັນການຮຽນຮູ້ຂ້າມຂະແໜງການ, ສົ່ງເສີມການຮຽນຮູ້ທີ່ແຕກຕ່າງຈາກຮູບແບບເດີມ ແລະ ດຳເນີນໄປຕະຫຼອດຊີວິດຜູ້ໃຫຍ່”.
2016 ສະພາການຮຽນຮູ້ຕະຫຼອດຊີວິດ ທີ່ ຄວີນສແລນ (Lifelong Learning Council Queensland Inc | Privacy and disclaimer | ABN 88 582 078 499 http://www.llcq.org.au/01_cms/details.asp?ID=12)
“ລະບົບການສຶກສາທັງໝົດຖືກອອກແບບມາເພື່ອເອື້ອອຳນວຍສຳລັບການຮຽນຮູ້ຕະຫຼອດຊີວິດ ແລະ ການຮຽນຮູ້ໃນທຸກດ້ານຂອງຊີວິດ ແລະສ້າງໂອກາດການຮຽນຮູ້ໃນໂຮງຮຽນ, ນອກໂຮງຮຽນ ແລະ ການຮຽນຮູ້ຕາມອັດທະຍາໃສ. ສຳລັບທຸກຄົນ ໃນທຸກຊວງອາຍຸ. ແນວຄວາມຄິດການຮຽນຮູ້ຕະຫຼອດຊີວິດຮຽກຮ້ອງໃຫ້ມີ ການປ່ຽນແປງຮູບແບບແນວຄວາມຄິດໃນການສອນ ແລະການຝຶກອົບຮົມແບບເກົ່າ, ຈາກການຖ່າຍທອດຄວາມຮູ້ສູ່ການຮຽນຮູ້ເພື່ອພັດທະນາຕົນເອງ ແລະ ຈາກການໄດ້ຮັບທັກສະ ເພື່ອການເປີດໂລກະທັດໃຫ້ກວ້າງຂຶ້ນ ແລະ ການປົດປ່ອຍ ແລະໃຊ້ປະໂຫຍດຈາກທ່າແຮງຂອງຄວາມຄິດທີ່ສ້າງສັນ. ການປ່ຽນແປງນີ້ເປັນສິ່ງຈຳເປັນໃນທຸກລະດັບການສຶກສາ ແລະ ທຸກປະເພດຂອງຂໍ້ກຳນົດ, ບໍ່ວ່າຈະເປັນການສຶກສາໃນໂຮງຮຽນ, ນອກໂຮງຮຽນ ຫຼື ການສຶກສາຕາມອັດທະຍາໄສ”. (ແຫຼ່ງຂໍ້ມູນ: ຍຸດທະສາດການສຶກສາຂອງ ອຸຍແນດສະໂກ ປີ 2014-2021).

### ທິດສະດີການສອນເດັກນ້ອຍ ແລະ ທິດສະດີການສອນຜູ້ໃຫຍ່
ທິດສະດີການສອນເດັກນ້ອຍ: ມີກົກເຄົ້າມາຈາກພາສາເກຣັກ “ນຳພາເດັກນ້ອຍ” ແມ່ນ ສິລະປະ ແລະ ວິທະຍາສາດຂອງການຊ່ວຍເດັກນ້ອຍໃນການຮຽນຮູ້, ນຳພາເດັກນ້ອຍໂດຍເນັ້ນໜັກວິທີການສອນ.
ທິດສະດີການສອນຜູ້ໃຫຍ່: ມີກົກເຄົ້າມາຈາກພາສາເກຣັກ “ນຳພາຜູ້ໃຫຍ່” ແມ່ນສິລະປະ ແລະວິທະຍາສາດຂອງການຊ່ວຍໃຫ້ຜູ້ໃຫຍ່ໄດ້ຮຽນຮູ້; ເປັນການສອນທີ່ເນັ້ນເອົາຜູ້ໃຫຍ່ເປັນຫຼັກ.



### ກິດຈະກຳສ້າງຄວາມລຶ້ງເຄີຍ
ກິດຈະກຳສ້າງຄວາມລຶ້ງເຄີຍ ຫຼື ເກມ ທີ່ໃຊ້ສຳລັບການຕ້ອນຮັບ ແລະ ສ້າງຄວາມເປັນກັນເອງໃນການສົນທະນາລະຫວ່າງຜູ້ເຂົ້າຮ່ວມກອງປະຊຸມ, ຝຶກອົບຮົມ, ການສ້າງທີມງານ, ເຮັດໃຫ້ຜູ້ເຂົ້າຮ່ວມມີຄວາມລຶ້ງເຄີຍກັນເຄີຍກັນເພີ່ມຂຶ້ນ. ໂດຍທົ່ວໄປແລ້ວ, ກິດຈະກຳສ້າງຄວາມລຶ້ງເຄີຍຈະຕ້ອງສາມາດເຊື່ອມຕໍ່ເຂົ້າສູ່ຫົວຂໍ້ຂອງການຝຶກອົບຮົມ.

### ການປະເມີນຄວາມຕ້ອງການກ່ອນການຝຶກອົບຮົມ
ການປະເມີນຄວາມຕ້ອງການກ່ອນການຝຶກອົບຮົມແມ່ນຂະບວນການທີ່ເປັນລະບົບທີ່ໃຊ້ເພື່ອກຳນົດບຸລິມະສິດ, ກຳນົດຄວາມຕ້ອງການ ແລະ ຊອງຫວ່າງ ລະຫວ່າງສະພາບການປະຈຸບັນ ແລະ ສິ່ງທີ່ຕ້ອງການຮຽນຮູ້. ມີຫຼາຍວິທີໃນການປະເມີນຄວາມຕ້ອງການກ່ອນການຝຶກອົບຮົມ ເຊັ່ນ ການສຳພາດ, ການຕອບແບບສອບຖາມ ແລະ ກຸ່ມສົນທະນາ.

### ການລະດົມສະໝອງ
ການລະດົມສະໝອງ: ເມື່ອມີກຸ່ມຄົນມາຮ່ວມກັນລະດົມຄວາມຄິດໃໝ່ໆ ໃນຫົວຂໍ້ທີ່ສົນໃຈ. ການລະດົມສະໝອງຄວນມີການສ້າງສະພາບແວດລ້ອມທີ່ເປັນກັນເອງ ເພື່ອໃຫ້ເຂົາເຈົ້າມີອິດສະຫຼະໃນການປະກອບຄຳເຫັນ ແລະກ້າວສູ່ພື້ນທີ່ຄວາມຄິດໃໝ່ ແລະ ສ້າງແນວຄວາມຄິດໃໝ່ ແລະ ການແກ້ໄຂບັນຫາ. ຜູ້ເຂົ້າຮ່ວມຄວນນຳສະເໜີແນວຄວາມຄິດໃໝ່ ແລ້ວເຊື່ອມຕໍ່ເຂົ້າກັບແນວຄວາມຄິດຂອງຜູ້ເຂົ້າຮ່ວມຄົນອື່ນ. ທຸກແນວຄວາມຄິດແມ່ນມີປະໂຫຍດ ແລະ ບັນທຶກໄວ້. ເປົ້າໝາຍຂອງການລະດົມສະໝອງແມ່ນການດຶງເອົາຄວາມຄິດອອກມາ ໂດຍການມີສ່ວນຮ່ວມຂອງສະມາຊິກໃນກຸ່ມ. (ແຫຼ່ງຂໍ້ມູນ http://www.brainstorming.co.uk/tutorials/whatisbrainstorming.html)

ຖ້າທ່ານສົນໃຈຕິດຕໍ່ກັບທີມງານຄູຝຶກເຮົາ.







# ສຽງຈາກຄູຝຶກ

ຄູຝຶກ ແລະ ຜູ້ເຂົ້າຮ່ວມແມ່ນນັກສະແດງໃນການຝຶກອົບຮົມ.

**ໃນຂະນະທີ່ຜູ້ເຂົ້າຮ່ວມ ເຂົ້າຝຶກອົບຮົມເພື່ອຮຽນ ແລະ ພັດທະນາທັກສະ, ພວກເຮົາອາດສົງໄສ ແມ່ນຫຍັງທີ່ຢູ່ໃນໃຈຂອງຄູຝຶກ; ທັດສະນະ ແລະ ມຸມມອງຂອງເຂົາເຈົ້າເປັນແນວໃດ, ຄວາມປະທັບໃຈຂອງເຂົາເຈົ້າ ແລະ ບາງທີ ເຂົາເຈົ້າອາດໄດ້ຮຽນບາງຢ່າງ. ບົດຄວາມນີ້ຈະເຫຼົ່າເຖິງຄວາມຄິດຂອງຄູຝຶກ 4 ທ່ານ. ທ່ານ ສຸພາບ, ທ່ານນາງ ເບຄຳ, ທ່ານນາງ ອານິຕາ ແລະ ທ່ານນາງ ໂຈແອນ.**

## ການເປັນຄູຝຶກໃນໂຄງການນີ້ມີຄວາມໝາຍແນວໃດກັບທ່ານ?

"ການເປັນຄູຝຶກເຮັດໃຫ້ ຂ້າພະເຈົ້າຮູ້ສຶກວ່າໄດ້ເດີນທາງສຳຫຼວດໃນວຽກ ງານວິຊາສະເພາະການສຶກສາຢ່າງແທ້ຈິງ, ຂ້າພະເຈົ້າໄດ້ຮຽນຮູ້ຫຼາຍຢ່າງຮ່ວມກັນກັບຜູ້ເຂົ້າຮ່ວມ ແລະ ບັນດາຄູຝຶກ" ທ່ານສຸພາບເວົ້າວ່າ. ໃນຖານະທີ່ເປັນຄູຝຶກ ໂດຍໄດ້ຮັບຄຸນຄ່າຈາກບັນດາຄູຝຶກທັງ 4 ປະສົບການບໍ່ພຽງແຕ່ຊ່ວຍຄູຝຶກໃນການແບ່ງປັນຄວາມຮູ້ ແລະ ໄດ້ຮູ້ກວ້າງຂຶ້ນໃນການສຶກສານອກໂຮງຮຽນເທົ່ານັ້ນ  ແຕ່ມັນຍັງໄດ້ເພີ່ມຄວາມອາດສາມາດ ເພື່ອຮັບມືກັບສິ່ງທ້າທາຍໃໝ່.

"ມັນເປັນໂອກາດສຳລັບການແບ່ງປັນປະສົບການ, ວິທີການທົດລອງ ແລະ ຄວາມຄິດສ້າງສັນ ໃນການສ້າງ ແລະ ເພີ່ມຄວາມອາດສາມາດໃນຫຼາຍລະດັບຂອງຂະແໜງການສຶກສານອກໂຮງຮຽນ. ເວົ້າງ່າຍໆກໍຄືການຮຽນຮູ້ ແລະ ການຢູ່ຮ່ວມກັນ". ທ່ານນາງ ອານິຕາ.

ທ່ານນາງເບຄຳ: ຂ້າພະເຈົ້າມີຄວາມຮູ້ສຶກພາກພູມໃຈຫຼາຍທີ່ໄດ້ເປັນສ່ວນໜຶ່ງໃນທີມງານ ToMT. ເປັນໂອກາດອັນດີສຳລັບຂ້າພະເຈົ້າໃນການພັດທະນາທັກສະການເປັນຜູ້ອຳນວຍຄວາມສະດວກ ແລະ ສົ່ງເສີມການຮຽນຮູ້ຕະຫຼອດຊີວິດໃນ ສປປ ລາວ. ແນວຄວາມຄິດກ່ຽວກັບການສຶກສາຜູ້ໃຫຍ່ຈະປ່ຽນວິທີການສອນ ແລະ ວິທີການຮຽນຮູ້ໃນລາວ, ປ່ຽນວິທີການຈາກຄູເປັນສູນກາງ ກາຍມາເປັນ ຜູ້ຮຽນເປັນສູນກາງ. ນອກນັ້ນຍັງສົ່ງເສີມການຄິດຢ່າງສົມເຫດສົມຜົນ (Critical Thinking) ແລະ ເພີ່ມຂີດຄວາມສາມາດຂອງຜູ້ຮຽນ ໃນການຈັດການການຮຽນຮູ້ດ້ວຍຕົນເອງ".

## ທ່ານຮຽນຮູ້ຫຍັງແນ່ຈາກປະສົບການດັ່ງກ່າວ?

ການວາງແຜນ, ການສ້າງທີມງານ, ຄຸນຄ່າຂອງການທົບທວນຄືນ ແລະ ການສົນທະນາກຸ່ມ, ການເປີດຮັບຄວາມຄິດເຫັນ ແລະ ນັບຖືຄວາມຄິດເຫັນຂອງເຂົາເຈົ້າ... ນີ້ແມ່ນສ່ວນໜຶ່ງຂອງບົດຮຽນຈາກບັນດາຄູຝຶກ!

ຫຼາຍກວ່າວິຊາການ, ລາຍການສິ່ງທີ່ຕ້ອງຮຽນ ທ່ານນາງອານິຕາ ຕັ້ງຊື່ໃຫ້ປະສົບການ ໃນການນຳສະເໜີຄວາມຕັ້ງໃຈ ແລະ ຄວາມກ່ຽວຂ້ອງ ຂອງຈຸດປະສົງຂອງ ໂຄງການ ToMT ກັບກົມການສຶກສານອກໂຮງຮຽນໂດຍ ດີວີວີ ອິນເຕີເນເຊິນແນວລວມທັງ ກອບແນວຄວາມຄິດຂອງການຮຽນຮູ້ແບບມີສ່ວນຮ່ວມ ແລະ ການຮຽນຮູ້ໂດຍຜ່ານປະສົບການ. ການເຮັດວຽກຮ່ວມກັນຢ່າງມີປະສິດທິພາບລະຫວ່າງພາກສ່ວນກ່ຽວຂ້ອງ ທີ່ຢູ່ໃນຂົງເຂດທີ່ແຕກຕ່າງກັນ ໃນການວາງແຜນ, ການຈັດການ ແລະ ການອຳນວຍຄວາມສະດວກ ໃນໂຄງການ ToMT ຢ່າງສ້າງສັນ ແລະ ມີປະສິດທິພາບ ຄວາມເອົາໃຈໃສ່ຕໍ່ກັບບົດບາດຍິງ-ຊາຍ ໃນແງ່ຂອງການມີສ່ວນຮ່ວມຢ່າງເທົ່າທຽມກັນ ຂອງຜູ້ເຂົ້າຮ່ວມເພດຍິງ ແລະ ລວມທັງ ການຝຶກອົບຮົມ



ບົດບາດຍິງຊາຍ. ມີຄວາມລະອຽດອ່ອນຕໍ່ກັບບໍລິບົດຂອງປະເທດລາວ ແລະ ປັບປຸງບົດຮຽນໃຫ້ແທດເໝາະກັບ ToMT ເພື່ອສາມາດແກ້ໄຂບັນຫາຢ່າງແທ້ຈິງ. ການເຮັດຮ່ວມວຽກກັບທີມງານທີ່ມີວັດທະນະທໍາແຕກຕ່າງກັນ ໃນສະພາບແວດລ້ອມແບບສອງພາສາ ໃນຖານະທີ່ເປັນຄະນະວິຊາການ, ເປັນຜູ້ຝຶກສອນ-ຜູ້ອໍານວຍຄວາມສະດວກ ແລະ ຜູ້ໃຫ້ຄໍາປຶກສາ.

"ເປັນເປັນວຽກທີ່ໜັກຫຼາຍໃນການປັບປຸງແຜນການຝຶກອົບຮົມໃນແຕ່ລະຄືນ, ແຕ່ການໄດ້ເຮັດວຽກຮ່ວມກັບທີມງານແມ່ນຊ່ວງເວລາທີ່ດີຫຼາຍ, ທຸງຄົນຊ່ວຍກັນຄິດ ແລະ ກຽມທຸກຢ່າງໃຫ້ພ້ອມສໍາລັບມື້ຕໍ່ໄປຂອງການຝຶກອົບຮົມ". ທ່ານນາງໂຈແອນ ໄດ້ເວົ້າໄວ້ ໃນຕອນທ້າຍຂອງບົດສໍາພາດ.

## ທ່ານຊ່ວຍແບ່ງປັນປະສົບການທີ່ທ່ານປະທັບໃຈຈາກການຝຶກອົບຮົມຄັ້ງນີ້ໄດ້ບໍ?

ຄວາມປະທັບໃຈມີຫຼາຍ ແລະ ເປັນການຍາກທີ່ຈະຍົກມາພຽງບາງຢ່າງ! ໃນອີກດ້ານໜຶ່ງຂ້າພະເຈົ້າເຫັນໄດ້ຢ່າງຈະແຈ້ງເຖິງຄວາມກ້າວໜ້າ ຂອງຜູ້ເຂົ້າຮ່ວມ ທ່ານສຸພາບກ່າວ. ຜູ້ເຂົ້າຮ່ວມຫຼາຍທ່ານມີຄວາມກ້າສະແດງອອກ ແລະ ມີຄວາມໝັ້ນໃຈໃນການເວົ້າຕໍ່ໜ້າຄົນຈໍານວນຫຼາຍ ຫຼື ການສະແດງຄວາມຄິດເຫັນຕໍ່ກັບບັນຫາໃດໜຶ່ງ; ແລະ ທີ່ແນ່ນອນ ກໍຄືການປະກອບສ່ວນທີ່ສໍາຄັນສໍາລັບວຽກງານການຮຽນຮູ້ຕະຫຼອດຊີວິດໃນສັງຄົມລາວ.

ໃນອີກດ້ານໜຶ່ງ ທ່ານນາງ ເບຄໍາ ກໍດີໃຈທີ່ໄດ້ແບ່ງປັນປະສົບການກ່ຽວກັບການທົບທວນຄືນທີ່ລາວໄດ້ຮັບຈາກຄູຝຶກຮ່ວມ ເຊິ່ງໄດ້ຊ່ວຍໃຫ້ນາງເຂົ້າໃຈຄວາມໝາຍຂອງການເປັນຜູ້ອໍານວຍຄວາມສະດວກ ລາວເວົ້າວ່າ "ບໍ່ຕ້ອງກັງວົນວ່າຜູ້ເຂົ້າຮ່ວມຈະມີຄວາມງຽບ ມັນເປັນສັນຍານວ່າເຂົາເຈົ້າກໍາລັງຮຽນຮູ້, ສະນັ້ນໃຫ້ເວລາເຂົາເຈົ້າ ແລະບໍ່ຕ້ອງຟ້າວບອກຄໍາຕອບ". ຂ້າພະເຈົ້າຈະເກັບຄໍາແນະນໍານີ້ໄວ້ໃນໃຈ ເມື່ອຂ້າພະເຈົ້າອໍານວຍຄວາມສະດວກການຝຶກອົບຮົມ, ເພື່ອໃຫ້ຂ້າພະເຈົ້າມີຄວາມໝັ້ນໃຈຂຶ້ນ ແລະ ບໍ່ກັງວົນຫຼາຍ!

ທ່ານນາງ ໂຈແອນ ອາດຈະມັກທີ່ສຸດແມ່ນຕອນທີ່ໄດ້ຍິນຜູ້ເຂົ້າຮ່ວມສົນທະນາກັນເລື່ອງການປະຕິບັດຕົວຈິງຂອງເຂົາເຈົ້າ. ຂ້າພະເຈົ້າປະທັບໃຈໃນຕອນຝຶກອົບຮົມບົດບາດຍິງ-ຊາຍ ເວລາທີ່ເຂົາເຈົ້າທີ່ທຸກຄົນມາລວມກັນ ແລະ ສົນທະນາກັນກ່ຽວກັບການຝຶກຫັດຕົວຈິງທີ່ພວກເຂົາໄດ້ເຮັດ ແລະພວກເຂົາຮູ້ສຶກວ່າໄດ້ຮຽນຮູ້ຈາກການຈັດຝຶກອົບຮົມດ້ວຍຕົນເອງ. ການຝຶກຫັດຕົວຈິງກັບຜູ້ເຂົ້າຮ່ວມແຕ່ລະທ່ານແມ່ນຄຸ້ມຄ່າສໍາລັບຂ້າພະເຈົ້າ ແລະ ຂ້າພະເຈົ້າຫວັງວ່າ ມັນຈະເປັນສິ່ງທີ່ພວກເຂົາໄດ້ຮຽນຮູ້ - ເຊັ່ນດຽວກັບການຮຽນຮູ້ຈາກການແບ່ງປັນປະສົບການຮ່ວມກັນ. ປະສົບການໃນ ToMT ມີຄວາມໝາຍ ແລະ ເຕີມເຕັມ ປະສົບການໃນການເປັນຄູຝຶກ.

"ບັນກ່ຜູ້ເຂົ້າຮ່ວມ' - ທ່ານນາງ ອານິຕາ ກ່າວຢ່າງພາກພູມໃຈ ແລະ ຄວາມຫ້າວຫັນ ແລະ ຕື່ນໂຕ ໃນການຮຽນຮູ້ຮ່ວມກັນຂອງຜູ້ເຂົ້າຮ່ວມ ແລະ ທີມງານຄູຝຶກ ແມ່ນແຮງຂັບເຄື່ອນຂອງຂອຍໃນໂຄງການ ToMT. ການປະຊຸມກັບທີມງານວິຊາການ ເຊິ່ງເປັນການນໍາທາງໄປສູ່ແນວຄວາມຄິດທີ່ສ້າງສັນ ແລະ ເລິກເຊິ່ງ, ງານລ້ຽງອາຫານຄໍ່າ ກັບຜູ້ເຂົ້າຮ່ວມຝຶກອົບຮົມ ແລະ ທີມງານຄູຝຶກທ້ອງຖິ່ນ ລວມທັງຜູ້ຊ່ຽວຊານ ດ້ານບົດບາດຍິງ-ຊາຍ ແລະ ການຕ້ອນຮັບທີ່ເປັນກັນເອງຂອງທີມງານ ດີວີວີອິນເຕີເນເຊິນແນວ ຢູ່ວຽງຈັນ ທັງໝົດເປັນຄວາມຊົງຈໍາທີ່ບໍ່ສາມາດລືບເລືອນ ແລະ ຈະຍັງຄົງຢູ່ ຈາກໂຄງການ ToMT.

# ບົດບາດຍິງຊາຍ - ໂມດູນພິເສດ

ອານິຕາ ບໍກາ, ຜູ້ປະສານງານໃນພາກພື້ນ (ສະມາຄົມ ASPBAE)



ຫຼັກສູດໂຄຼບາລີ ແມ່ນໂຄງສ້າງຂອງຫຼັກສູດທີ່ປະກອບດ້ວຍ ໂມດູນ ທີ່ມີຄວາມຫຼາກຫຼາຍວິທີການຂອງການສຶກສາຜູ້ໃຫຍ່, ດ້ວຍການສ້າງຫົວຂໍ້ຝຶກອົບຮົມທາງເລືອກ 1-2 ໂມດູນ ໃນຫົວຂໍ້ ທີ່ເໝາະສົມກັບເນື້ອໃນຂອງວັດທະນະທຳ-ສັງຄົມຂອງຜູ້ເຂົ້າຮ່ວມຝຶກອົບຮົມນັ້ນໆ.ຫົວຂໍ້ທີ່ກ່ຽວກັບບົດບາດຍິງ-ຊາຍ, ໂດຍສະເພາະແມ່ນການມີສ່ວນຮ່ວມຂອງແມ່ຍິງໃນຫຼາກຫຼາຍກິດຈະກຳ ໃນການສຶກສານອກໂຮງຮຽນໃນທົ່ວປະເທດ ເຊິ່ງໄດ້ຖືກຍົກຂຶ້ນມາເລື້ອຍໆ ໃນກິດຈະກຳການຝຶກອົບຮົມຄູຝຶກ. ຈາກນັ້ນຈຶ່ງໄດ້ມີການຕົກລົງໃຫ້ຫົວຂໍ້ "ບົດບາດຍິງຊາຍ" ເປັນໂມດູນທາງເລືອກສຳລັບການຝຶກອົບຮົມຄູຝຶກໃນ ສປປ ລາວ.

## ຈຸດປະສົງຂອງໂມດູນບົດບາດຍິງ-ຊາຍ

ໂມດູນກ່ຽວກັບບົດບາດຍິງ-ຊາຍແມ່ນໄດ້ອອກແບບ ອີງຕາມ ການປະເມີນຄວາມຕ້ອງການ ຂອງຜູ້ເຂົ້າຮ່ວມຝຶກ ອົບຮົມ ໂດຍອີງຕາມຜົນໄດ້ຮັບຂອງການປະເມີນຜົນ. ຈຸດປະສົງຂອງໂມດູນບົດບາດຍິງ-ຊາຍແມ່ນສະແດງເຖິງຄວາມຕ້ອງການຮຽນຮູ້ ແລະ ເຂົ້າໃຈຢ່າງເລິກເຊິ່ງກ່ຽວກັບບົດບາດ ແລະ ຄວາມບໍ່ສະເໝີພາບລະຫວ່າງບົດບາດຍິງ-ຊາຍ ໂດຍສະເພາະ ແມ່ນແນໃສ່ວຽກຂອງຜູ້ເຂົ້າຮ່ວມຝຶກອົບຮົມໂດຍພົວພັນເຖິງຂໍ້ກຳນົດ ແລະ ວຽກງານການສຶກສານອກໂຮງຮຽນ. ໂມດູນນີ້ຍັງໄດ້ບັນຈຸໜ້າວຽກການເຊື່ອມສານບົດບາດຍິງ-ຊາຍເຂົ້າໃນແຜນງານການສຶກສາໃນລະດັບຊຸມຊົນຂອງພວກເຂົາເຈົ້າອີກດ້ວຍ.

## ວິທີການສູ່ການຝຶກອົບນົມບົດບາດຍິງ-ຊາຍ

ທີມງານຂອງການຝຶກອົບຮົມໂມດູນ ບົດບາດຍິງ-ຊາຍໂດຍມີຊ່ຽວຊານດ້ານບົດບາດຍິງ-ຊາຍຈາກ ສປປ ລາວ ເປັນຜູ້ນຳພາ. ການຝຶກອົບຮົມສຳລັບໂມດູນນີ້ແມ່ນຢູ່ທ່າແຂກ, ເພື່ອເປັນການປຸ່ງບັນຍາກາດ ພ້ອມທັງ ສ້າງສະພາບແວດລ້ອມການຮຽນຮູ້ ແລະ ໃຫ້ໂອກາດແກ່ຜູ້ທີ່ເຂົ້າຮ່ວມ ແລະ ທີມງານຜູ້ອຳນວຍຄວາມສະດວກໄດ້ເດີນທາງ ແລະ ຢູ່ຮ່ວມກັນເປັນເວລາ 3 ມື້.



Our Gender Expert(Standing with Mic.) made speech during the training

## ຜົນໄດ້ຮັບ

ແນວຄວາມຄິດຂອງບົດບາດຍິງ-ຊາຍໄດ້ຖືກອະທິບາຍຜ່ານການປະຕິບັດກິດຈະກຳ ເຊິ່ງຜູ້ເຂົ້າຮ່ວມໄດ້ຮັບຮູ້ວ່າມັນເປັນປະໂຫຍດຫຼາຍ. ຕໍ່ມາແມ່ນການສົນທະນາກຸ່ມຍ່ອຍກ່ຽວກັບຄວາມບໍ່ສະເໝີພາບລະຫວ່າງຍິງ-ຊາຍໃນສັງຄົມລາວ, ເຊິ່ງຜູ້ເຂົ້າຮ່ວມຕ້ອງໄດ້ກຳນົດໃຫ້ເຫັນຄວາມແຕກຕ່າງກັນລະຫວ່າງບົດບາດ ແລະ ຄວາມເປັນເພດໂດຍກຳເນີດ, ໂດຍສ່ວນຕົວ ແລະ ໃນສັງຄົມ ເຊັ່ນ ຄອບຄົວ, ຊຸມຊົນ ແລະ ວຽກງານ. ຜົນໄດ້ຮັບມາຂອງການການຝຶກອົບຮົມບົດບາດຍິງ-ຊາຍກ້າວໄປເຖິງການວາງນະໂຍບາຍ, ການການມີສ່ວນຮ່ວມໃນແຜນງານ ແລະ ບົດບາດຂອງພະນັກງານໃນສູນການສຶກສານອກໂຮງຮຽນ. ຕົ້ນໄມ້ບັນຫາ ໄດ້ຖືກຍົກມາໃຫ້ເຫັນໂດຍຜູ້ເຂົ້າຮ່ວມ ຜ່ານກິດຈະກຳກຸ່ມສົນທະນາ ເພື່ອສ້າງຄວາມເຂົ້າໃຈໃນເຫດ ແລະ ຜົນຂອງພື້ນຖານ ຄວາມຮຸນແຮງຂອງບັນຫາບົດບາດຍິງ-ຊາຍ ໂດຍການຈັດລຳດັບຄວາມສຳຄັນເໝືອນເປັນໜຶ່ງໃນບັນຫາທີ່ແຜ່ຫຼາຍຢູ່ໃນສັງຄົມລາວ.

ດ້ວຍເຫດຜົນດ້ານຮີດຄອງປະເພນີ, ບັນຫາໂຄງລ່າງ ພື້ນຖານຢູ່ເຂດຊົນນະບົດຫ່າງໄກສອກຫຼີກ, ການແຕ່ງງານໄວ ແລະ ຄວາມເປັນແມ່ ແມ່ນໄດ້ກຳນົດ ແລະ ເພື່ອແກ້ໄຂບັນຫາເຫຼົ່ານີ້ ຜູ້ເຂົ້າຮ່ວມຝຶກອົບຮົມຕົກລົງເຫັນດີວ່າ ນະໂຍບາຍແຫ່ງຊາດຄວນສຸມໃສ່ການເພີ່ມໂອກາດການສຶກສາຂອງແມ່ຍິງ ແລະ ສ້າງສະພາບແວດລ້ອມໃຫ້ສອດຄ່ອງກັບການເຄົາລົບແມ່ຍິງໃນຊີວິດປະຈຳວັນ. ການສຶກສາແມ່ນສຳຄັນຫຼາຍເພື່ອສະແດງໃຫ້ເຫັນເຖິງພື້ນຖານຄວາມຮ້າຍແຮງຂອງບົດບາດຍິງ-ຊາຍ, ເຊິ່ງແມ່ນການເຫັນດີໂດຍທົ່ວໄປ ພາຍຫຼັງທີ່ໄດ້ມີການສົນທະນາເຖິງຫົວຂໍ້ນີ້ຢ່າງກວ້າງຂວາງ.

ການສະຫຼຸບຂອງໂມດູນທາງເລືອກບົດບາດຍິງ-ຊາຍ ໃນການຝຶກອົບຮົມຄູຝຶກນັ້ນ ຜູ້ເຂົ້າຮ່ວມ ທັງໝົດໄດ້ພົບວ່າມັນມີປະໂຫຍດຫຼາຍ ສຳລັບພວກເຂົາເຈົ້າ. ໂດຍລວມມັນແມ່ນຄວາມຄິດເຫັນສ່ວນໃຫຍ່ຂອງຜູ້ເຂົ້າຮ່ວມຝຶກອົບຮົມ, ໃນມື້ສຸດທ້າຍຂອງການຝຶກອົບຮົມ, ຄວາມພະຍາຍາມໃນການເຂົ້າມາມີສ່ວນຮ່ວມໃນການສົນທະນາທີ່ກ່ຽວພັນເຖິງຄວາມບໍ່ສະເໝີພາບຍິງ-ຊາຍໃນການຝຶກອົບຮົມທີ່ກຳລັງດຳເນີນຢູ່ ແລະ ມັນກາຍເປັນອັນລະອຽດອ່ອນຕໍ່ປະເດັນບົດບາດຍິງ-ຊາຍໃນຂະນະທີ່ການວາງແຜນ ແລະ ການຈັດຕັ້ງປະຕິບັດແຜນງານການສຶກສານອກໂຮງຮຽນ ໃນຊຸມຊົນຂອງເຂົາເຈົ້າ. ບັນດາຜູ້ເຂົ້າຮ່ວມຝຶກອົບຮົມທັງໝົດຍັງໄດ້ສະແດງໃຫ້ເຫັນຕື່ນເຖິງຄວາມຕ້ອງການໃນການສິ່ງທີ່ໄດ້ມາຈາກຄວາມສະເໝີພາບບົດບາດຍິງ-ຊາຍໃນການສຶກສາ ແລະ ປະເດັນອື່ນໆ ທີ່ກ່ຽວຂ້ອງ.

ການລິເລີ່ມຂອງ ດີວີດີ ອິນເຕີເນເຊີນແນວ ຫ້ອງການປະຈຳພາກພື້ນຢູ່ທີ່ວຽງຈັນໄດ້ບັນຈຸເອົາໂມດູນ ບົດບາດຍິງ-ຊາຍເຂົ້າໃນການຝຶກອົບຮົມຄູຝຶກ ແລະ ໄດ້ເລີ່ມການເຈລະຈານຳກັນວ່າ ຜູ້ເຂົ້າຮ່ວມຮ່ວມຝຶກອົບຮົມຄູຝຶກນີ້ຕ້ອງມີຈຳນວນເທົ່າກັນ, ນີ້ສະແດງເຖິງການໃຫ້ຄຳໝັ້ນສັນຍາໃນການເຊື່ອມສານບົດບາດຍິງ-ຊາຍ ແລະ ໂດຍອີງໃສ່ຄວາມເອົາໃຈໃສ່ກ່ຽວກັບບົດບາດຍິງ-ຊາຍໃນແຜນງານຂອງເຂົາເຈົ້າ. ■

vhs DVV International

Education for Everyone. Worldwide.
Lifelong.



ຂຽນໂດຍ
ໂຈແອນ ບິນສ

# ເສັ້ນທາງໃນຕໍ່ໜ້າ:
## ຊຸມຊົນການເຮັດວຽກຕົວຈິງ ແລະ ສູນຂໍ້ມູນຂ່າວສານ

### ພາຍຫຼັງທີ່ສິ້ນສຸດການຈັດກອງປະຊຸມປຶກສາຫາລື ຄັ້ງສຸດທ້າຍ ໃນເດືອນ ມິຖຸນາ ປີນີ້, ການຝຶກອົບຮົມສໍາລັບຄູຝຶກຂອງພວກເຮົາໃນຕໍ່ໜ້າຈະແມ່ນຫົວຂໍ້ໃດ?

ໃນຫຼາຍກໍລະນີ ວຽກງານທີ່ແທ້ຈິງແມ່ນຫາກໍເລີ່ມຕົ້ນ. ການຝຶກອົບຮົມຄູຝຶກຢ່າງເຕັມທີ່, ເປົ້າໝາຍຂອງເຂົາເຈົ້າແມ່ນການແລກປ່ຽນຄວາມຮູ້ລະຫວ່າງເພື່ອນຮ່ວມງານ ແລະ ຈະສານຕໍ່ວຽກງານການສຶກສາອື່ນຕື່ມອີກ. ນີ້ແມ່ນ ຂັ້ນຕອນທີ່ຈໍາເປັນເພື່ອໃຫ້ແນ່ໃຈວ່າຜູ້ເຂົ້າຮ່ວມຂອງພວກເຮົາ ເອົາຄວາມຮູ້ໄປນໍາໃຊ້ໃຫ້ໄດ້ດີທີ່ສຸດ ໃນການສຶກສານອກໂຮງຮຽນ ແລະການສຶກສາຜູ້ໃຫຍ່ ໃນ ສປປ ລາວ

ເພື່ອເປັນສະໜັບສະໜູນ ແລະ ສົ່ງເສີມ ການຝຶກອົບຮົມຄູຝຶກ, ທີມງານການຝຶກອົບຮົມຈະຕ້ອງໄດ້ສືບຕໍ່ການມີສ່ວນຮ່ວມນໍາກັນກັບກຸ່ມພາຍໃຕ້ການປະຕິບັດງານຮ່ວມກັນເປັນຊຸມຊົນ, ເຖິງຢ່າງໃດກໍຕາມພວກເຮົາຍັງຈະໄດ້ ໃຫ້ການສະໜັບສະໜູນຕື່ມອີກ ແລະ ສ້າງບໍລິບົດສໍາລັບຄູຝຶກຂອງພວກເຮົາ ເພື່ອການຕິດຕໍ່ປະສານງານເຮັດວຽກຮ່ວມກັນ ລະຫວ່າງພວກຄູຝຶກດ້ວຍກັນໃນຕໍ່ໜ້າ.

ຕະຫຼອດໄລຍະການຝຶກອົບຮົມຄູຝຶກ, ພວກເຮົາໄດ້ນໍາໃຊ້ແຟດບຸກ ແລະ ການສົ່ງຂໍ້ຄວາມ(Facebook page and Messenger) ໃນການ ຕິດຕໍ່ປະສານງານການເຮັດວຽກຮ່ວມກັນ ແລະ ພວກເຮົາຫວັງວ່າສິ່ງນີ້ບໍ່ແມ່ນແຕ່ພຽງການສືບຕໍ່ເທົ່ານັ້ນແຕ່ມັນຍັງແມ່ນການຜັນຂະຫຍາຍວຽກງານ. ການເຫັນໂພສໃນ facebook ກ່ຽວກັບການຝຶກອົບຮົມການເປັນຄູຝຶກແມ່ນເປັນເລື່ອງທີ່ໜ້າຍິນດີຫຼາຍ. ເສັ້ນທາງການສື່ສານອອນລາຍຍັງເປັນການໃຫ້ໂອກາດໃນການທົບທວນຄືນ ແລະແລກປ່ຽນຄໍາຖາມ, ແນວຄິດ, ບັນຫາ ຫຼື ແລກປ່ຽນບົດຮຽນທີ່ປະສົບຜົນສໍາເລັດພາຍໃນກຸ່ມ ແລະ ສິ່ງເຫຼົ່ານີ້ແມ່ນຂົງເຂດທີ່ພວກເຮົາຈະເຮັດວຽກຮ່ວມກັບຜູ້ເຂົ້າຮ່ວມຝຶກອົບຮົມເພື່ອຜັນຂະຫຍາຍຕໍ່ໄປ.

ອີກວິທີສໍາຄັນອັນໜຶ່ງ ທີ່ພວກເຮົາຈະສືບຕໍ່ການມີສ່ວນຮ່ວມພາຍໃນກຸ່ມຄູຝຶກ ໂດຍຜ່ານສູນຂໍ້ມູນຂ່າວສານ ຂອງສູນພັດທະນາການສຶກສານອກໂຮງຮຽນ. ເຊິ່ງກໍາລັງດໍາເນີນການສ້າງ ແລະ ມີສະຖານທີ່ເພື່ອເກັບມ້ຽນປຶ້ມ ແລະ ອຸປະກອນອື່ນໆ, ເຊັ່ນດຽວກັນກັບການປະສານວຽກແບບອອນລາຍໂດຍຜ່ານການສື່ສັງຄົມອອນລາຍ ແລະເວັບໄຊ. ເປົ້າໝາຍຂອງສູນແມ່ນແນໃສ່ຮັບໃຊ້ຄວາມຕ້ອງການຂອງນັກການສຶກສານອກໂຮງຮຽນ ດ້ວຍຂໍ້ມູນອອນລາຍເປັນຫຼັກ ເຊິ່ງເປັນສິ່ງສໍາຄັນໂດຍສະເພາະຜູ້ທີ່ເຮັດວຽກໃນບັນດາແຂວງ.

ຍຸດທະສາດຕົ້ນຕໍຂອງສູນຂໍ້ມູນຂ່າວສານແມ່ນເພື່ອສ້າງພື້ນຖານທີ່ເຂັ້ມແຂງໃຫ້ກັບຜູ້ນໍາໃຊ້ ເປັນການເຊື້ອເຊີນຄູຝຶກໃຫ້ "ເປັນຜູ້ນໍາໃຊ້ກ່ອນ" ບັນດາຊັບພະຍາກອນທີ່ສູນສາມາດສະໜອງໃຫ້. ພວກເຮົາຫວັງວ່າໃນຕໍ່ໜ້າການເຮັດວຽກຮ່ວມກັບຄູຝຶກ ເໝືອນດັ່ງເປັນການທົດສອບລະບົບ ແລະ ຊຸມຊົນການເຮັດວຽກຕົວຈິງ ແມ່ນມີບົດບາດສໍາຄັນໃນການສ້າງອົງປະກອບອອນລາຍໃນສູນ ເພື່ອໃຫ້ຊົມໃຊ້ໄດ້ງ່າຍ ແລະເຂົ້າເຖິງໄດ້ທົ່ວປະເທດ. ໂດຍສະເພາະຢ່າງຍິ່ງ, ສູນແມ່ນມີເປົ້າໝາຍເພື່ອພັດທະນາຖັນແຖວຂອງຊັບພະຍາກອນທີ່ມີພາບ ແລະ ສຽງ ແລະ ການສະຫຼຸບຫຍໍ້ຂອງເອກະສານທີ່ໜ້າສົນໃຈ ເພື່ອຄວາມວ່ອງໄວ ແລະ ເຂົ້າເຖິງໄດ້.

ອີກດ້ານໜຶ່ງ, ພວກເຮົາຍັງຈະຕ້ອງພິຈາລະນາ ແລະ ຊອກຫາຊ່ອງທາງອື່ນເພື່ອສືບຕໍ່ພົວພັນ ແລະ ການມີສ່ວນຮ່ວມຂອງຊຸມຊົນ. ຫວັງວ່າ ພວກເຮົາຍັງມີໂອກາດທີ່ຈະທ້ອນໂຮມຜູ້ເຂົ້າຮ່ວມຝຶກອົບຮົມເພື່ອໃຫ້ມາພົບກັນ ແລະ ແລກປ່ຽນປະສົບການກ່ຽວກັບບົດຮຽນຂອງເຂົ້າເຈົ້າ, ບາງທີອາດຈະຈັດການຝຶກອົບຮົມເພີ່ມເຕີມໃນຫົວຂໍ້ອື່ນໃຫ້ເຂົາເຈົ້າຕື່ມອີກ. ທີມງານຝຶກອົບຮົມແມ່ນຍັງຈະຕ້ອງໄດ້ຊອກຫາໂອກາດເພີ່ມເຕີມໃຫ້ແກ່ກຸ່ມຜູ້ເຂົ້າຮ່ວມຕື່ມອີກໃນອະນາຄົດ. ໃນຂັ້ນສຸດທ້າຍ, ຈະຕ້ອງມີການລິເລີ່ມການສືບຕໍ່ຝຶກອົບຮົມຄູຝຶກ ເພື່ອເປັນການແລກປ່ຽນກັບນັກການສຶກສາອື່ນໆ ແລະ ເພື່ອຊຸກຍູ້ພວກເຂົາເຈົ້າບໍ່ໃຫ້ມີພຽງແຕ່ການນໍາໃຊ້ເທົ່ານັ້ນແຕ່ຕ້ອງໃຫ້ມີການສົ່ງຄວາມຮູ້,ທັກສະທີ່ພວກເຮົາເຈົ້າໄດ້ຮຽນມາຕື່ມອີກ.

ໃນເດືອນມິຖຸນາ, ບັນດາຄູຝຶກຈະຕ້ອງໄດ້ຫາເວລາໃດໜຶ່ງ ເພື່ອສະເຫຼີມສະຫຼອງຜົນສໍາເລັດຂອງເຂົາເຈົ້າ ແລະ ທົບທວນຄືນເຖິງຊຸມຊົນແຫ່ງການຮຽນຮູ້ທີ່ໂດດເດັ່ນ ທີ່ເຂົາເຈົ້າໄດ້ເປັນສ່ວນໜຶ່ງຂອງໂຄງການນີ້. ທຸກໆ ຄົນໃນກຸ່ມ ໄດ້ຍົກລະດັບທັກສະການຝຶກອົບຮົມຂອງເຂົາເຈົ້າ ແລະ ເຮົາພວກເຫັນໄດ້ເຖິງຄວາມໝັ້ນໃຈ ທີ່ເພີ່ມຂຶ້ນ ຕະຫຼອດເວລາການເຂົ້າຮ່ວມຫຼັກສູດໂກຼບາລີນີ້.

ພາຍຫຼັງສິ້ນສຸດການຮຽນ, ວຽກຕົວຈິງໃນການສ້າງ ແລະແບ່ງປັນຄວາມຮູ້ ແມ່ນຈະໄດ້ເລີ່ມຕົ້ນຂຶ້ນ ແລະ ທີມງານການຝຶກອົບຮົມຈະລໍຖ້າເບິ່ງບັນດາຄູຝຶກເຫຼົ່ານັ້ນຈັດກິດຈະກໍາກ່ຽວກັບສິ່ງທີ່ເຂົາເຈົ້າໄດ້ຮຽນມາ. ພວກເຮົາຍັງຈະຕ້ອງສະໜັບສະໜູນຜູ້ເຂົ້າຮ່ວມ ສືບຕໍ່ສ້າງສາຍສໍາພັນ ລະຫວ່າງຄູຝຶກ ແລະ ຜູ້ເຂົ້າຮ່ວມຝຶກນໍາກັນແບບໃດ, ໂດຍສະເພາະຢ່າງຍິ່ງກັບນັກການສຶກສາຜູ້ໃຫຍ່ອື່ນໆ -ໃນສະຖານທີ່ເຮັດວຽກ, ໃນພາກພື້ນ, ໃນທົ່ວປະເທດ ແລະ ໃນທົ່ວໂລກ.

# ສຽງຈາກຜູ້ເຂົ້າຮ່ວມ



ໂຄງການ ToMT ຊ່ວຍໃຫ້ ຂ້າພະເຈົ້າ ໄດ້ປັບປຸງວິທີການສອນ, ປະຈຸບັນນີ້ ຂ້າພະເຈົ້າໄດ້ນຳໃຊ້ກິດຈະກຳ ເຂົ້າໃນການສິດສອນ ເຊັ່ນ: ການ ສະແດງບົດບາດສົມມຸດ ແລະ ລະດົມສະໝອງ ແລະ ນັກຮຽນ ກໍມ່ວນໄປກັບມັນ ແລະ ມີສ່ວນຮ່ວມ ຫຼາຍຂຶ້ນ ແລະ ສ້າງ ບັນຍາກາດ ໃນຫ້ອງຮຽນ ທີ່ມີຊີວິດຊີວາ.

*- ບົວລຽນ ທຳປັນຍາ -*



ຂ້າພະເຈົ້າຂໍຊົມເຊີຍວິທີການສອນ ໃນແບບສາກົນ ໂດຍວິທີການຮຽນຮູ້ ແບບມີສ່ວນຮ່ວມ. ນັກຮຽນຂອງ ຂ້າພະເຈົ້າ ອຍຫຼາຍຄົນແມ່ນຄູທີ່ ມາຈາກ ໂຮງຮຽນໃນເຂດທ້ອງຖິ່ນ ເພື່ອຍົກລະດັບຄວາມຮູ້. ເຕັກນິກ ທີ່ຂ້າພະເຈົ້າໄດ້ຮຽນຮູ້ຈະເປັນ ປະໂຫຍດ ໃນການແກ້ປັນຫາ ໃນພື້ນທີ່ເຫຼົ່ານັ້ນ.

*- Bounsou Xaiyasone -*



ຂໍຂອບໃຈການຝຶກອົບຮົມ ຂ້າພະເຈົ້າ ຮູ້ວ່າ ການສຶກສານອກໂຮງຮຽນ ເປັນຕົວ ແທນຂອງຄວາມເປັນໄປໄດ້ໃຫ້ທຸກຄົນໄດ້ ຮັບການສຶກສາ ແລະ ໂດຍສະເພາະ ຜູ້ທີ່ ບໍ່ຮູ້ໜັງສື. ໃນຕອນສິດສອນ ສິ່ງສຳຄັນຄື ຕ້ອງມີວິທີການຝຶກອົບຮົມທີ່ເໝາະສົມ . ຂ້າພະເຈົ້າຮູ້ສຶກມີຄວາມຮັບຜິດຊອບ ແລະ ມີຄວາມກ້າຫຼາຍຂຶ້ນ ໃນການນຳສິ່ງ ຄວາມຮູ້ ແລະ ວິທີການສອນແບບໃໝ່ທີ່ ໄດ້ຮຽນຈາກຄູຝຶກ

*- ໂດອີ ວີຣະນາມ -*



ການຝຶກອົບຮົມນີ້ສ້າງຄວາມທ້າທາຍ ໃນການເຮັດວຽກໃນຂະແໜງການສຶກສາ ນອກໂຮງຮຽນ ໂດຍສະເພາະໃນເວລາທີ່ ພວກເຮົາເຮັດວຽກຮ່ວມກັບ ກຸ່ມຄົນທີ່ມີ ພື້ນຖານຄວາມຮູ້, ວັດທະນະທຳ ແລະ ພາສາ ແຕກຕ່າງກັນ, ພວກເຮົາຕ້ອງການ ທັກສະໃນຫຼາຍດ້ານ ເພື່ອໃຫ້ເຮັດວຽກ ໄດ້ດີຂຶ້ນ.

*- ທະນູສັກ ຕຸນາລົມ -*



ການເປັນຄູຝຶກໃນການສຶກສາຜູ້ໃຫຍ່ ເປັນສິ່ງທ້າທາຍສຳລັບຂ້າພະເຈົ້າ ຍ້ອນວ່າ ຜູ້ຮຽນແມ່ນມີພື້ນຖານຄວາມຮູ້ ແລະ ຄວາມຮັບຮູ້ ທີ່ແຕກຕ່າງກັນ ແລະ ການສຶກສາແມ່ນມີຄວາມຫຼາກຫຼາຍ ເຊັ່ນ: ເສດຖະກິດ, ສັງຄົມ, ວັດທະນະທຳ ແລະ ຊົນເຜົ່າ.

*- ພັນມະຫາ ຜາງທະວົງ -*



ຂ້າພະເຈົ້າບໍ່ເຄີຍເຂົ້າຮ່ວມກ່ຽວກັບ ບົດບາດບົງ-ຊາຍມາກ່ອນ. ຕອນນີ້ ຂ້າພະເຈົ້າເຂົ້າໃຈເຖິງບັນຫາ ແລະ ຄວາມບໍ່ສະເໝີພາບໃນສັງຄົມເຮົາ. ຫົວຂໍ້ນີ້ແມ່ນມີການກ່ຽວເນື່ອງກັບ ວຽກງານ ຂອງຂ້າພະເຈົ້າ ແລະພວກເຮົາ ຕ້ອງສະໜັບສະໜູນເພດຍິງໃຫ້ມີສ່ວນ ຮ່ວມໃນການດຳລົງຊີວິດ ແລະ ຊ່ວຍ ພວກເຂົາເບິ່ງແຍງລູກຫຼາຍຂຶ້ນ.

*- ສີສະຫວັນ ຊໍ່ -*



ດ້ວຍເຕັກນິກວິທີການສອນໃໝ່ , ຂ້າພະເຈົ້າມີຄວາມໝັ້ນໃຈຂຶ້ນ. ຂ້າພະເຈົ້າຄິດວ່າທັກສະການຈູງໃຈ ແລະ ການອະທິບາຍເນື້ອໃນມີດີຂຶ້ນ. ກ່ອນໜ້ານີ້ ຂ້າພະເຈົ້າໃຊ້ວິທີບັນລະຍາຍເປັນສ່ວນຫຼາຍ ແລະ ປະຈຸບັນນີ້ ຂ້າພະເຈົ້ານຳໃຊ້ກິດຈະກຳ ເຊັ່ນ ການລະດົມສະໝອງ ແລະ ກຸ່ມສົນທະນາ. ດ້ວຍກິດຈະກຳເຫຼົ່ານີ້ ຂ້າພະເຈົ້າໄດ້ຊຸກຍູ້ໃຫ້ນັກຮຽນ ເຂົ້າມາມີສ່ວນຮ່ວມ ແລະ ທຸກຄົນໄດ້ຜົນປະໂຫຍດຈາກວິທີການຮຽນຮູ້.

*- ຄຳອານົງ ນະໄພວົງ -*



ຂ້າພະເຈົ້າ ໄດ້ເກັບກ່ຽວປະສົບການ ແລະ ທັກສະ ຢ່າງຫຼວງຫຼາຍໃນການສຶກສາຜູ້ໃຫຍ່. ມັນເປັນແນວທາງໃຫ້ຂ້າພະເຈົ້າໃນການຖ່າຍທອດບົດຮຽນໃຫ້ແກ່ຄູຝຶກການສອກສານອກໂຮງຮຽນ. ຂ້າພະເຈົ້າສາມາດ ຮຽນຮູ້ກ່ຽວກັບສະຖານະການ, ບັນຫາ ແລະ ລັກສະນະສະເພາະຂອງກຸ່ມເປົ້າໝາຍ; ການຮຽນເພີ່ມເຕີມໃນປຶ້ມແບບຮຽນ, ສະໝອງບຸກຄະລາກອນທີ່ມີທັກສະການສຶກສາ, ຈາກການຮຽນເປັນກຸ່ມ, ນໄໃຊ້ສື່ການຮຽນ-ການສອນ ສຳລັບການສຶກສາໃນໂຮງຮຽນ ແລະ ນອກໂຮງຮຽນ.

*- ກິຄຳ ພິລາວົງສັກ -*



ຂ້າກະເຈົ້າມຸ່ງຫວັງຢາກເປັນຄູຝຶກກ່ຽວກັບບົດບາດຍິງ-ຊາຍ ແລະ ກອງປະຊຸມນີ້ຊ່ວຍໃຫ້ຂ້າພະເຈົ້າ ຮູ້ສິດທິຂອງຕົນເອງ ແລະ ຂ້າພະເຈົ້າຮູ້ສຶກມີຄວາມໝັ້ນໃຈ. ໂດຍສະເພາະ ການແລກປ່ຽນປະສົບການກັບແມ່ຍິງທ່ານອື່ນແມ່ນແຮງຈູງໃຈໃຫ້ຂ້າພະເຈົ້າ. ບົດຮຽນທີ່ສຳຄັນທີ່ສຸດຈາກ ໂຄງການ ToMT ສຳລັບຂ້າພະເຈົ້າແມ່ນ ແຜນການຝຶກອົບຮົມແມ່ນສາມາດປັບປ່ຽນໄດ້ ອີງຕາມການຕອບສະໜອງໃນຫ້ອງຮຽນ ໃນຂະນະທີ່ຂຶ້ນຫ້ອງສອນ.

*- Vanh Phommany -*






ການຝຶກອົບຮົມນີ້ ຊ່ວຍໃຫ້ຂ້າພະເຈົ້າໄດ້ຢ່າງຫຼວງຫຼາຍ, ກ່ອນໜ້ານີ້, ຂ້າພະເຈົ້າມີແຕ່ສອນອີງຕາມປະສົບການ ຂອງຂ້າພະເຈົ້າ. ສິ່ງທີ່ຂ້າພະເຈົ້າໄດ້ຈາກ ToMT ແລະ ບວກກັບປະສົບການທີ່ມີ ຊ່ວຍໃຫ້ຂ້າພະເຈົ້າເຂົ້າໃຈຢ່າງຈະແຈ້ງ ແລະ ໝັ້ນໃຈຫຼາຍຂຶ້ນ. ກ່ອນໜ້ານີ້ຂ້າພະເຈົ້າມີພຽງແຕ່ການປະຕິບັດຕົວຈິງ ບໍ່ມີທິດສະດີ ເຊັ່ນຕົວຢ່າງ 1+1= 2 ບໍ່ມີເຕັກນິກ ໃນການສອນ, ແຕ່ການຝຶກອົບຮົມນີ້ ຊ່ວຍໃຫ້ຂ້າພະເຈົ້າໄດ້ຄົ້ນພົບວິທີການສອນ ແລະ ການນຳໃຊ້ເກມ ເພື່ອເຮັດໃຫ້ການຮຽນເປັນທີ່ໜ້າສົນໃຈຂຶ້ນ ແລະ ເຮົາສາມາດມີຄູຝຶກຫຼັກ ແລະ ຄູຝຶກຜູ້ຊ່ວຍກໍສາມາດອຳນວຍຄວາມສະດວກ ຕິດຕາມຜູ້ຮຽນ ແລະ ເຮັດໃຫ້ການສິດສອນມີຄວາມຫຼາກຫຼາຍ.

*- ວິລັດ ບຸດແສງງາມ -*



ຄວາມເອົາໃຈໃສ່ໃນການຖ່າຍທອດ ບົດຮຽນຂອງທີມງານຄູຝຶກ ແລະ ສິ່ງສຳຄັນແມ່ນການເປີດໂອກາດ ໃຫ້ນັກສຳມະນາກອນ ທຸກທ່ານໄດ້ມີສ່ວນຮ່ວມ. ຄວາມສາມັກຄີຊ່ວຍເຫຼືອເຊິ່ງກັນ ແລະ ກັນນອງນັກສຳມະນາກອນດ້ວຍກັນ. ບົດຮຽນທຸກຢ່າງ ແມ່ນມີຄຸນຄ່າທີ່ສຸດ ບໍ່ວ່າຈະເປັນ ເຕັກນິກການຮຽນ-ການສອນຜູ້ໃຫຍ່, ບົດບາດຍິງ-ຊາຍ, ການສື່ສານ ແລະ ການເຮັດວຽກເປັນທີມ.

*- ພຸດທະລິດ ແກ້ວອຸດອນ -*

### ສິ່ງທີ່ໜ້າສົນໃຈ

ເວັບໄຊສຳຄັນໃນພາກພື້ນ

www.aspbae.org
www.pria.org
www.seameocelll.org

### ສິ່ງພິມທີ່ໜ້າສົນໃຈ

Adult Education and Development
AED 83: Skills and Competencies
AED 82: Global Citizenship Education
AED 81: Communities
AED 80: Post 2015

### ທັດສະນະນາໆຊາດ ໃນວຽກງານການສຶກສາຜູ້ໃຫຍ່

IPE 76: Refugees: A challenge for adult education
IPE 75: Agenda - 2030 - Education and Lifelong Learning in the Sustainable Development Goals
IPE 74: 21th Century Mass Graves - Proceeding of the International Conference Tbilisi, Georgia
IPE 73: Digital Adult Education - A Key to Global Development?

### ຈົດໝາຍຂ່າວ ໃນພາກພື້ນ

The ASPBAE Bulletin access via www.aspbae.org
NEXUS - access via www.uil.unesco.org
Voice Rising - access via www.icae2.org
Education Policy Matters - via www.unescobkk.org

### ສິ່ງພິມໃໝ່

DVV International Impact Report 2009-2015
Sharing for Learning in Lao PDR: DVV International Engaged in Lifelong Learning for Sustainable Development in Asia Pacific

ຈັດພິມໂດຍ ດີວີວີ ອິນເຕີເນເຊີນແນວ
ຮ່ວມກັບຄູ່ຮ່ວມພັດທະນາໃນ ສອອ ລາວ, ກຳປູເຈຍ ແລະ
ໃນອາຊີໃຕ້ ແລະ ອາຊີຕາເວັນອອກສ່ຽງໃຕ້

ກອງບັນນາທິການ: ດຣ. ກ້າ ສະເຫຼີມສຸກ, ຂັນທອງ ອິນທະຈັກ,
ພິລານີ ພິດສະໄໝ
ທີມງານບັນນາທິການ: ດາລູນນີ ສີສຸລາດ, ສົມໃຈ ແກ້ວເມກ,
ດອກຄຳ ຊົມສີຫາປັນຍາ, ຈອດ ບຣອນ, ແອນນາ ຄາປາສໄຊ
ບັນນາທິການ: ອູເວີ ກາກເຕີນສະແລເກີ

ດີວີວີ ອິນເຕີເນເຊີນແນວ
ຫ້ອງການປະຈຳພາກພື້ນອາຊີ
ຕາເວັນອອກສ່ຽງໃຕ້
351/19 ຖະໜົນວັດນາກໃຫຍ່, ບ້ານທ່າພະລານໄຊ
ເມືອງສີສັດຕະນາກ
ຕູ້ ປ.ນ. 1215, ນະຄອນຫຼວງວຽງຈັນ, ສປປ ລາວ
ໂທ.: +856 21 315832-3
ແຟັກ: +856 21 312511
info@dvv-international.la
www.dvv-international.la

**Education for Everyone. Worldwide. Lifelong.**